ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

17-20 ມິຖຸນາ 2022
ປີທີ 11
ສະບັບທີ 852

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

## ສສຊ ສຸມໃສ່ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ




(ສພຊ) ໃນລະຫວ່າງວັນທີ 14-16 ມິຖຸນາ 2022 ພາຍໃຕ້ການເປັນປະທານຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມເປັນຄະນະປະທານກອງປະຊຸມ; ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນໄປຢ່າງມີຈຸດສຸມ ແລະ ກົງໄປກົງມາ ໂດຍປະທານກອງປະຊຸມໄດ້ມີຄຳຖາມເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນຢ່າງເລິກເຊິ່ງ ເພື່ອໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ບົດລາຍງານຂອງລັດຖະບານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022.

ພ້ອມນັ້ນ, ຍັງໄດ້ຊັກຖາມເຈາະຈີ້ມກັບທີ່ຕໍ່ບັນຫາຕ່າງໆ ທີ່ໄດ້ຮັບຟັງການຊີ້ແຈງຈາກທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ, ຜູ້ວ່າການທະນາຄານ ແຫ່ງ ສປປລາວ, ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ຮອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ລັດຖະມົນຕີກະຊວງກະຊວງພາຍໃນ, ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ວາລະວັນທີ 17 ມິຖຸນາ 2022 ພາຍໃຕ້ການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມເປັນຄະນະປະທານ; ບັນດາທ່ານ ສສຊ ໄດ້ຮັບຟັງການລາຍງານ ແລະ ສຸມໃສ່ປະກອບຄຳເຫັນຕໍ່ບົດລາຍງານທີ່ທ່ານ ພຸດ ສິມມາລາວົງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ລາຍງານກ່ຽວກັບການຈັດຕັ້ງປະຕິບັດຄາດໝາຍ ໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ; ທ່ານ

ອ່ານຕໍ່ໜ້າ 3

## 6 ຕົ້ນປີ 2022 GDP ຂະຫຍາຍຕົວ 4,3%



ໃນວັນທີ 13 ມິຖຸນາຜ່ານມາ, ທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ການລາຍງານ ແບ່ງອອກເປັນ 2 ພາກ ດັ່ງນີ້:

**ພາກທີ 1: ການຕີລາຄາສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນໄລຍະ 6 ເດືອນຕົ້ນປີ 2022.**

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 6 ເດືອນຕົ້ນປີ 2022 ແມ່ນຢູ່ໃນເງື່ອນໄຂສະພາບການ ຂອງໂລກ ແລະ ພາກພື້ນ ຍັງສືບຕໍ່ຜັນແປຢ່າງສັບສົນ. ສຳລັບຢູ່ພາຍໃນປະເທດເຮົາ, ຄຽງຄູ່ກັບການມີກາລະໂອກາດຫລາຍດ້ານ ກໍຍັງສືບຕໍ່ປະເຊີນກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍໃນຫລາຍ

ອ່ານຕໍ່ໜ້າ 3

## ກະຊວງການເງິນ ສາມາດເກັບລາຍຮັບໄດ້ 10.633,81 ຕື້ກີບ



ໃນວັນທີ 13 ມິຖຸນາຜ່ານມາ, ທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ກ່ຽວກັບຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022, ຄາດຄະເນ 6 ເດືອນທ້າຍປີ 2022 ແລະ ໝົດປີ 2022 ເຊິ່ງມີລາຍລະອຽດ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 05 ເດືອນ, ຄາດຄະເນ 6 ເດືອນຕົ້ນປີ ແລະ ໝົດປີ 2022

ອ່ານຕໍ່ໜ້າ 3

## ຄະນະຜູ້ແທນສະພາແຫ່ງຊາດລາວ ເຂົ້າຮ່ວມກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 13




## ສ້າງຄວາມຮັບຮູ້ ໃນການຄຸ້ມຄອງດ້ານການເງິນ-ເງິນຕາ

(ສພຊ) ວັນທີ 27 ພຶດສະພາຜ່ານມາ, ໄດ້ມີພິທີປາຖະກະຖາການຄຸ້ມຄອງດ້ານການເງິນ-ເງິນຕາ ແລະ ການຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ ໂດຍແມ່ນຄະນະໂຄສະນາອົບຮົມສູນກາງພັກ ຮ່ວມກັບທະນາຄານແຫ່ງ ສປປລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າຈັດຂຶ້ນ ເພື່ອໂຄສະນາປຸກລະດົມສຶກສາອົບຮົມທາງດ້ານແນວຄິດການເມືອງ ແລະ ສ້າງຄວາມຮັບຮູ້, ຄວາມເຂົ້າໃຈໃຫ້ເປັນເອກະພາບຕໍ່ກັບພະນັກງານ-ລັດຖະກອນ ກ່ຽວກັບການຄຸ້ມຄອງດ້ານການເງິນ-ເງິນຕາ ແລະ ການຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກໃຫ້ເລິກເຊິ່ງ. ພິທີປາຖະກະຖາຄັ້ງນີ້, ທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍພະນັກງານຂອງສະພາແຫ່ງຊາດຈຳນວນໜຶ່ງເຂົ້າຮ່ວມ.

ໃນພິທີ, ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານຫ່ງ ສປປ ລາວ ໄດ້ຂຶ້ນປາຖະກະຖາໃນຫົວຂໍ້: ການຄຸ້ມຄອງການເງິນ-ເງິນຕາ ແລະ ແລກປ່ຽນເງິນຕາຂອງທະນາຄານ ໂດຍໄດ້ຍົກໃຫ້ເຫັນການຄຸ້ມຄອງການເງິນ-ເງິນຕາ ແລະ ແລກປ່ຽນເງິນຕາຂອງທະນາຄານ, ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ແມ່ນການເຮັດແນວໃດໃຫ້ອັດຕາແລກປ່ຽນ ຫລື ຄ່າເງິນກີບມີຄວາມສະຫງົບ ແລະ ປະກອບສ່ວນຄຸ້ມຄອງອັດຕາເງິນເຟີ້ ບໍ່ໃຫ້ເພີ່ມຂຶ້ນສູງເກີນໄປ; ເປັນຫຍັງຈຶ່ງຕ້ອງຮັກສາສະຖຽນລະພາບເງິນຕາແຫ່ງຊາດ ຍ້ອນວ່າສະຖຽນລະພາບເງິນຕາແຫ່ງ

ອ່ານຕໍ່ໜ້າ 2


ໜ້າ 4

ທະນາຄານພັດທະນາລາວ
LDB Bank
ໜ້າ 7


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

ຊົມເຊີຍວັນແພດລາວ ຄົບຮອບ 57 ປີ (18/6/1965-18/6/2022) ຢ່າງສຸດໃຈ!

## ສສຊ...



ນາງ ສວນສະຫວັນ ວິຍະເກດ ລັດຖະມົນຕີກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ, ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ, ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງສະເໜີໂດຍທ່ານ ນາງ ມະນີວັນ ເຢຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ຕາງໜ້າກອງເລຂານຸການກອງປະຊຸມຮັບຜິດຊອບວຽກງານຂົງເຂດວັດທະນະທຳ-ສັງຄົມ.

ໂອກາດດັ່ງກ່າວ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ກັບບົດລາຍງານຂອງລັດຖະບານທັງ 2 ບົດດັ່ງກ່າວ ແລະ ຍັງໄດ້ຮັບຟັງການຊີ້ແຈງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ຮອງລັດຖະມົນຕີກະຊວງເຕັກໂນໂລຢີ ແລະ ການສື່ສານ, ລັດຖະມົນຕີກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຜູ້ຕາງໜ້າກະຊວງປ້ອງກັນຄວາມສະຫງົບ.

(ນາງ ປາກາລັກ ພົມມີໄຊ)

## ຄະນະ...

(ສພຊ) ວັນທີ 7 ມິຖຸນາ 2022 ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ສົມຍາ ປະເສີດ ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ພະນັກງານ-ວິຊາການທີ່ກ່ຽວຂ້ອງ ໄດ້ເຂົ້າຮ່ວມກອງປະຊຸມຄະນະປະສານງານສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA Caucus) ຄັ້ງທີ 13 ພາຍໃຕ້ຫົວຂໍ້: "ການຮ່ວມມືທາງດ້ານເສດຖະກິດດິຈິຕອນໃນອາຊຽນ ພາຍຫລັງການແຜ່ລະບາດຂອງພະຍາດໂຄວິດ-19" ໂດຍການເປັນເຈົ້າພາບຂອງສະພາຜູ້ແທນລາຊະດອນແຫ່ງລາຊະອານາຈັກໄທ ໃນຮູບແບບທາງໄກ. ກອງປະຊຸມໄດ້ດຳເນີນໄປເປັນເວລາ 1 ວັນເຕັມ ເຊິ່ງມີຄະນະຜູ້ແທນຈາກລັດຖະສະພາສະມາຊິກໄອປາ, ເລຂາທິການໃຫຍ່ໄອປາ, ເລຂາທິການໃຫຍ່ອາຊຽນ ແລະ ກອງເລຂາໄອປາ ເຂົ້າຮ່ວມທັງໝົດ 62 ທ່ານ.

ກອງປະຊຸມດັ່ງກ່າວ, ເປັນກົນໄກທີ່ສຳຄັນຂອງໄອປາ ໂດຍມີຈຸດປະສົງໃຫ້ບັນດາລັດຖະສະພາສະມາຊິກ ໄດ້ຮ່ວມກັນແລກປ່ຽນ, ທົບທວນຄືນ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດບັນດາມະຕິຕ່າງໆທີ່ມີການຮັບຮອງເອົາຮ່ວມກັນໃນກອງປະຊຸມສະມັດຊາໃຫຍ່ໄອປາໃນແຕ່ລະປີ. ໃນກອງປະຊຸມຄັ້ງນີ້, ຄະນະຜູ້ແທນທີ່ເຂົ້າຮ່ວມໄດ້ແລກປ່ຽນ ແລະ ປຶກສາຫາລືກັນຕໍ່ຫົວຂໍ້ ການຮ່ວມມືທາງດ້ານເສດຖະກິດດິຈິຕອນໃນອາຊຽນພາຍຫລັງການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດບັນດາມະຕິ ຈຳນວນ 8 ສະບັບ ໃນຂົງເຂດວຽກງານການເມືອງ, ເສດຖະກິດ, ສັງຄົມ ແລະ ວຽກງານສະມາຊິກສະພາແຫ່ງຊາດເພດຍິງຂອງໄອປາ ທີ່ໄດ້ຮັບຮອງເອົາໃນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 42 ທີ່ບຣູໄນດາຣູຊາລາມ ເປັນເຈົ້າພາບ ໃນປີ 2021 ຜ່ານມາ.

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຫົວໜ້າຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ລາຍງານກ່ຽວກັບການຜັນຂະຫຍາຍ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາມະຕິຕ່າງໆຂອງກອງປະຊຸມໃຫຍ່ໄອປາ ຄັ້ງທີ 42 ຜ່ານມາ ເຊິ່ງສະພາແຫ່ງຊາດລາວ ໄດ້ຫັນເອົາບັນດາມະຕິດັ່ງກ່າວ ມາປັບໃຊ້ເຂົ້າກັບລະບຽບກົດໝາຍ ແລະ ນະໂຍບາຍແຫ່ງຊາດ ເພື່ອຊຸກຍູ້ການເສີມສ້າງຄວາມໝັ້ນຄົງທາງດ້ານໄຊເບີ ແລະ ການປົກປ້ອງຂໍ້ມູນທາງໄຊເບີ, ການສົ່ງເສີມຄວາມໝັ້ນຄົງຂອງມະນຸດ ໃນການນຳໃຊ້ລະບົບດິຈິຕອນຢ່າງເທົ່າທຽມກັນ, ການສົ່ງເສີມການທູດລັດຖະສະພາ ເພື່ອກ້າວໄປສູ່ປະຊາຄົມອາຊຽນ, ການນຳໃຊ້ລະບົບດິຈິຕອນຢ່າງເທົ່າທຽມ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບເສດຖະກິດຂະໜາດນ້ອຍ ແລະ ກາງ (MSMEs) ແລະ ເສີມສ້າງຄວາມເຂັ້ມແຂງ ໃນການເຊື່ອມໂຍງເສດຖະກິດຈຸລະພາກ, ການຟື້ນຟູເສດຖະກິດຫລັງການແຜ່ລະບາດຂອງພະຍາດໂຄວິດ-19, ການນຳໃຊ້ລະບົບດິຈິຕອນ ເຂົ້າໃນວຽກງານການຫລຸດຜ່ອນຜົນກະທົບຂອງການປ່ຽນແປງດິນຟ້າອາກາດ, ການຫັນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ລົງສູ່ທ້ອງຖິ່ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດເປົ້າໝາຍລະດັບຊາດມີປະສິດທິຜົນ ແລະ ການສົ່ງເສີມຄວາມສາມາດທາງດ້ານເສດຖະກິດຂອງເພດຍິງ ໃນການປະຕິບັດໜ້າທີ່ວຽກງານໃນອະນາຄົດ ໂດຍຜ່ານການນຳໃຊ້ລະບົບດິຈິຕອນ ແລະ ການເງິນ. ພ້ອມດຽວກັນນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ມີຄຳເຫັນຕໍ່ກອງປະຊຸມ ກ່ຽວກັບການຮ່ວມມືທາງດ້ານເສດຖະກິດດິຈິຕອນໃນອາຊຽນ ພາຍຫລັງການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງສະພາແຫ່ງຊາດລາວໄດ້ມີການປັບປຸງນະໂຍບາຍ ແລະ ກົດໝາຍຫລາຍສະບັບ ພ້ອມທັງຮັບຮອງເອົາວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ 20 ປີ (2021-2040) ເຊິ່ງຈະເປັນປັດໄຈສຳຄັນໃນການພັດທະນາເສດຖະກິດແຫ່ງຊາດໃຫ້ມີການຂະຫຍາຍຕົວຢ່າງເຂັ້ມແຂງ ແລະ ຍືນຍົງ.

ໃນຕອນທ້າຍຂອງກອງປະຊຸມ ຄະນະຜູ້ແທນທີ່ເຂົ້າຮ່ວມ ໄດ້ເຫັນດີເປັນເອກະພາບກັນຮັບຮອງເອົາບົດລາຍງານຂອງກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 13 ໂດຍການລົງລາຍເຊັນຜ່ານທາງອີເລັກໂຕນິກ ເຊິ່ງບົດລາຍງານດັ່ງກ່າວ ຈະຖືກນຳໄປລາຍງານໃນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 43 ທີ່ຈະຈັດຂຶ້ນໃນທ້າຍເດືອນພະຈິກ 2022 ນີ້, ທີ່ລາຊະອານາຈັກກຳປູເຈຍ. ນອກຈາກນັ້ນ, ກອງປະຊຸມ ຍັງໄດ້ຕົກລົງເຫັນດີໃຫ້ ສສ.ຫວຽດນາມ ເປັນເຈົ້າພາບຈັດກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 14 ໃນປີ 2023.

(ຂ່າວ: ກຳມາທິການຕ່າງປະເທດ, ພາບ: ກົງທະນູຄຳ ພິພັດເສລີ)

## ສັງຄວາມ...

ຊາດ ມີຜົນຕໍ່ລາຄາສິນຄ້າ, ຄ່າຄອງຊີບທັງໝົດ, ຕົ້ນທຶນໃນການດຳເນີນທຸລະກິດ, ຄວາມເຊື່ອໝັ້ນຕໍ່ການລົງທຶນຈາກຕ່າງປະເທດ, ຕໍ່ລາຍຮັບຂອງປະເທດ ແລະ ພັນທະໃນການຊຳລະໜີ້ສິນຕໍ່ຕ່າງປະເທດ ແລະ ມີຜົນຕໍ່ການພັດທະນາເສດຖະກິດ-ສັງຄົມປະເທດ. ດັ່ງນັ້ນ, ທະນາຄານແຫ່ງ ສປປລາວ ຈຶ່ງໄດ້ຖືເອົານະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດເປັນເຄື່ອງມືຫລັກຂອງຕົນ ໃນຕະຫລອດໄລຍະ 2 ທົດສະວັດທີ່ຜ່ານມາ.

ພ້ອມນີ້, ທ່ານ ນາງ ຈັນສຸກ ແສງພະຈັນ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ເຜີຍແຜ່ກ່ຽວກັບສະພາບການຄຸ້ມຄອງການນຳເຂົ້ານ້ຳມັນ ແລະ ສິນຄ້າອຸປະໂພກ-ບໍລິໂພກ, ການຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫລາດທີ່ມີທ່າອ່ຽງສູງໃນປັດຈຸບັນ, ເພື່ອເຮັດໃຫ້ສະພາບລາຄາສິນຄ້າໃນທ້ອງຕະຫລາດພາຍໃນບໍ່ມີການເໜັງຕີງແຮງ, ຫລຸດຜ່ອນຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ລັດຖະບານ ກໍຄືກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ກຳນົດຫລາຍນິຕິກຳ ແລະ ວາງມາດຕະການຕ່າງໆ ອອກມາເປັນແຕ່ລະໄລຍະ ເຊິ່ງມາດຕະການທີ່ສຳຄັນຈຳນວນໜຶ່ງທີ່ນຳໃຊ້ໃນປັດຈຸບັນ ມີຄື: ຍຸດທະສາດກອງທຶນຄັງແຮເຂົ້າ ເຊິ່ງກອງທຶນດັ່ງກ່າວ ຈະນຳໃຊ້ເຂົ້າເພື່ອແຊກແຊງລາຄາເຂົ້າສານ ຫລືຂາຍໃນລາຄາແຊກແຊງ ໃນເວລາທີ່ລາຄາເຂົ້າສານ ມີການເໜັງຕີງຂຶ້ນສູງເກີນເພດານທີ່ລັດກຳນົດໃຫ້; ຂະແໜງ ອຄ ໄດ້ມີການຕິດຕາມສະພາບການສະໜອງ ແລະ ລາຄາຕາມທ້ອງຕະຫລາດເປັນປະຈຳແຕ່ລະວັນ ເພື່ອປ້ອງກັນການສວຍໂອກາດທຸກຮູບແບບ; ກຳນົດໂຄງປະກອບລາຄາຂາຍຍົກ-ຂາຍຍ່ອຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໂດຍສະເພາະ ສິນຄ້າໃນບັນຊີຄວບຄຸມ ຫລື ສິນຄ້າ ທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ມີຄວາມອ່ອນໄຫວສູງ ໂດຍສະເພາະປະເພດສະບຽງອາຫານ ເຊັ່ນ: ເຂົ້າກິນ, ຊີ້ນໝູ, ງົວ, ຄວາຍ, ໄຂ່, ໄກ່ປອກ, ເປັດປອກ, ປານິນ ແລະ ພືດຜັກຕ່າງໆ; ຍຸດທະສາດ ດັດສົມການສະໜອງ ແລະ ຄວາມຕ້ອງການ ຫລື ແຜນດຸ່ນດ່ຽງ ເພື່ອໃຫ້ການສະໜອງພຽງພໍ ກັບຄວາມຕ້ອງການຂອງສັງຄົມ ແລະ ເພື່ອປ້ອງກັນບັນຫາສິນຄ້າຂາດແຄນ, ສວຍໂອກາດກັກຕຸນ, ຂຶ້ນລາຄາ ແລະ ຍຸດທະສາດເຄື່ອງມືດ້ານນິຕິກຳ ເປັນຕົ້ນແມ່ນນຳໃຊ້ມາດຕະການ ພາຍໃຕ້ດຳລັດ 474/ນຍ, ລົງວັນທີ 18 ພະຈິກ 2010 ເປັນເຄື່ອງມືທາງດ້ານນິຕິກຳທີ່ສຳຄັນ ໃນການຄຸ້ມຄອງລາຄາສິນຄ້າ.

ໂອກາດນີ້, ທ່ານຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮຽກຮ້ອງໃຫ້ຈົ່ງມີສະຕິໃນສະພາບການທີ່ມີຄວາມຫຍຸ້ງຍາກປັດຈຸບັນ, ຈົ່ງຊ່ວຍກັນຮັບຮູ້ ແລະ ເຂົ້າໃຈສະຖານະການ ພ້ອມທັງຕິດຕາມສະພາບການຢ່າງໃກ້ຊິດ ແລະ ຊ່ວຍກັນໃນການປະຢັດມັດທະຍັດ, ໃຊ້ຈ່າຍໃນສິ່ງທີ່ຈຳເປັນ ໃນຍາມທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ໂດຍສະເພາະແມ່ນການຊົມໃຊ້ນ້ຳມັນເຊື້ອໄຟ ຖ້າຫາກພົບເຫັນການສວຍໂອກາດຂຶ້ນລາຄາສິນຄ້າ ສາມາດໂທແຈ້ງສາຍດ່ວນ 1510.

(ນາງ ກົງໃຈ ແສງອຳພັນ)

## ເລື່ອງເດັ່ນ, ຂ່າວເດັດ

\# ຄັດໂດຍ: ຫອມສະນິດ

❑ *ມູນຄ່າການນຳເຂົ້າ ແລະ ສົ່ງອອກ ຂອງ ສປປ ລາວ ປະຈຳເດືອນພຶດສະພາ 2022 ບັນລຸໄດ້ປະມານ 1.000 ລ້ານໂດລາ. ໃນນັ້ນ, ມູນຄ່າການສົ່ງອອກປະມານ 481 ລ້ານໂດລາ, ມູນຄ່າການນຳເຂົ້າປະມານ 529 ລ້ານໂດລາ, ຂາດດຸນການຄ້າປະມານ 48 ລ້ານໂດລາ (ໃນນີ້ ຍັງບໍ່ລວມມູນຄ່າການສົ່ງອອກໄຟຟ້າ); ສິນຄ້າສົ່ງອອກຫລັກປະກອບມີ ຄຳປະສົມ, ຄຳແທ່ງ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ແຮ່ທອງ, ເຍື່ອໄມ້ ແລະ ເສດເຈ້ຍ, ຢາງພາລາ ແລະ ອື່ນໆ ສ່ວນສິນຄ້ານຳເຂົ້າຫລັກປະກອບ ມີພາຫະນະທາງບົກ (ນອກຈາກລົດຈັກ, ລົດໄຖ), ນ້ຳມັນກາຊວນ, ອຸປະກອນກົນຈັກ (ນອກຈາກເຄື່ອງກົນຈັກພາຫະນະ), ຊິ້ນສ່ວນອາໄຫລ່ລົດ (ລວມທັງຢາງ, ແວ່ນ, ໂສ້...) ແລະ ອື່ນໆ.*

**ນສພ. ປະຊາຊົນ 14/06/2022**

❑ *ນັບແຕ່ວັນທີ 15 ມິຖຸນາ 2022 ເປັນຕົ້ນໄປ ທະນາຄານ ແຫ່ງ ສປປລາວ (ທຫລ) ໄດ້ເປີດຈຳໜ່າຍພັນທະບັດ ທຫລ ສະກຸນເງິນກີບ ງວດທີ 1 ໃນວົງເງິນຈຳໜ່າຍທັງໝົດ 5.000 ຕື້ກີບ ການຈຳໜ່າຍພັນທະບັດ ທຫລ ໄດ້ດຳເນີນຜ່ານທະນາຄານທຸລະກິດ 9 ແຫ່ງ ທີ່ເປັນທະນາຄານຕົວແທນຈຳໜ່າຍ; ເຊິ່ງອາຍຸຂອງພັນທະບັດ ມີອາຍຸຄົບກຳນົດ 6 ເດືອນ ບໍ່ສາມາດປ່ຽນມືໄດ້, ອັດຕາດອກເບ້ຍ 20% ຕໍ່ປີ, ຊຳລະດອກເບ້ຍ ແລະ ຕົ້ນທຶນຄັ້ງດຽວເມື່ອຄົບກຳນົດອາຍຸໄຖ່ຖອນ, ມູນຄ່າຈຳໜ່າຍພັນທະບັດ ຕ່ຳສຸດ 100.000 ກີບ, ບຸກຄົນສາມາດຊື້ໄດ້ບໍ່ເກີນ 2 ຕື້ກີບ, ນິຕິບຸກຄົນສາມາດຊື້ໄດ້ສູງສຸດບໍ່ເກີນ 10 ຕື້ກີບ.*

**ນສພ. ວຽງຈັນໃໝ່ 15/06/2022**

❑ *ກົມກົງສູນກະຊວງການຕ່າງປະເທດ ແຈ້ງໃຫ້ຊາບວ່າ: ນອກຈາກຢູ່ກົມກົງສູນ ທີ່ນະຄອນຫລວງວຽງຈັນ ຍັງມີສູນຮັບຄຳຮ້ອງຂໍໜັງສືຜ່ານແດນຢູ່ແຂວງອຸດົມໄຊ, ຊຽງຂວາງ, ໄຊຍະບູລີ, ຄຳມ່ວນ, ສະຫວັນນະເຂດ ແລະ ແຂວງຈຳປາສັກ ໄລຍະນີ້ຂໍຄວາມຮ່ວມມືມາຍັງປະຊາຊົນທີ່ຢູ່ແຂວງເຫລົ່ານີ້ ຫລື ຢູ່ບັນດາແຂວງໃກ້ຄຽງ ໃຫ້ເຂົ້າໄປໃຊ້ບໍລິການຢູ່ບັນດາສູນຮັບຄຳຮ້ອງດັ່ງກ່າວ ເພື່ອເປັນການຫລຸດຜ່ອນຄວາມແອອັດຂອງປະຊາຊົນຢູ່ນະຄອນຫລວງວຽງຈັນ ແລະ ຂໍໃຫ້ມີສະຕິຢ່າຫລົງເຊື່ອບັນດານາຍໜ້າທີ່ອ້າງຕົນວ່າຈະສາມາດພາໄປເຮັດ ຫລື ຊ່ວຍແລ່ນເອກະສານ ພ້ອມທັງເລັ່ງລັດຂັ້ນຕອນການອອກໜັງສືຜ່ານແດນໃຫ້ໄດ້ໄວ ຢູ່ນະຄອນຫລວງວຽງຈັນ (ເຈົ້າໜ້າທີ່ຈະພິຈາລະນາອຳນວຍຄວາມສະດວກອອກດ່ວນໃຫ້ສະເພາະກໍລະນີສຸກເສີນເຊັ່ນ: ຄົນເຈັບທີ່ມີຄວາມຈຳເປັນຕ້ອງເດີນທາງດ່ວນ ໄປຮັກສາປິ່ນປົວຢູ່ຕ່າງປະເທດ ໂດຍມີເອກະສານຢັ້ງຢືນຈາກໂຮງໝໍເທົ່ານັ້ນ).*

**ນສພ. ວຽງຈັນໃໝ່ 15/06/2022**

# ມອບ-ຮັບລົດນຳສົ່ງຄົນເຈັບ ໃຫ້ ສພຂ ອຸດົມໄຊ



(ສພຊ) ວັນທີ 8 ມິຖຸນາ 2022 ທີ່ດ້ານໜ້າ ຕຶກອາຄານຄະນະເລຂາທິການສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບລົດຊ່ວຍເຫລືອ ເປັນລົດນຳສົ່ງຄົນເຈັບ (Ambulance) ຈຳນວນ 1 ຄັນ ໃຫ້ແກ່ສະພາປະຊາຊົນແຂວງ(ສພຂ)ອຸດົມໄຊເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະທີ່ກ່ຽວຂ້ອງຂອງແຂວງ; ຕາງໜ້າມອບໂດຍທ່ານ ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ ແລະ ຮັບໂດຍທ່ານ ຄຳພວງ ເດດກົງພົນ ຮອງເລຂາທິການສະພາປະຊາຊົນແຂວງ ອຸດົມໄຊ ໂດຍການເຂົ້າຮ່ວມເປັນສັກຂີພິຍານຂອງທັງສອງຝ່າຍ.

(ນາງ ສຸພາວັນ ທອມສະນິດ)

## 6 ຕົ້ນປີ...

ດ້ານເຊັ່ນກັນ. ແຕ່ດ້ວຍຄວາມພະຍາຍາມຢ່າງຕັ້ງໜ້າ ຂອງການຈັດຕັ້ງໃນລະບົບການເມືອງປະຊາທິປະໄຕທຸກຂັ້ນ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໄດ້ດຳເນີນຕາມສະພາບ-ເງື່ອນໄຂ ໃນແຕ່ລະໄລຍະ ເຊິ່ງສາມາດຕີລາຄາໄດ້ດັ່ງນີ້:

**1. ເປົ້າໝາຍທີ 1:** ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ.

1) ການຂະຫຍາຍຕົວດ້ານເສດຖະກິດ: ໃນໄລຍະ 6 ຕົ້ນປີ ຂອງປີ 2022 GDP ຂະຫຍາຍຕົວ 4,3%, ຄິດໄລ່ເປັນມູນຄ່າເທົ່າກັບ 95.212 ຕື້ກີບ ເທົ່າກັບ 49,6% ຂອງແຜນການ, ຂະແໜງຕົ້ນຕໍ ທີ່ຍັງຊຸກຍູ້ໃຫ້ GDP ຂະຫຍາຍຕົວຄືດັ່ງກ່າວ ເປັນຕົ້ນ: ຂະແໜງກະສິກຳ-ປ່າໄມ້ ໄດ້ສືບຕໍ່ຂະຫຍາຍຕົວ 2,2% ໃນແຜນ (2,7%), ໃນນີ້ ການຜະລິດເຂົ້ານາແຊງ ໄດ້ລື່ນແຜນ 2,94%, ການຜະລິດຊີ້ນ, ໄຂ່ ແລະ ປາ ເທົ່າກັບ 50% ຂອງແຜນການ; ການສົ່ງອອກຜະລິດຕະພັນກະສິກຳ ເທົ່າກັບ 66,05% ຂອງແຜນການ; ສົ່ງອອກພືດ ເທົ່າກັບ 67,8% ຂອງແຜນການ ແລະ ສົ່ງອອກສັດລ້ຽງ ເທົ່າກັບ 46,74% ຂອງແຜນການ; ຂະແໜງອຸດສາຫະກຳ 5,1% ໃນແຜນການ 5,3%, ສາມາດຜະລິດກະແສໄຟຟ້າ ໄດ້ 21.431 ລ້ານກິໂລວັດໂມງ ເທົ່າກັບ 55,86% ຂອງແຜນການ; ມູນວ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເທົ່າກັບ 51,38% ຂອງແຜນການ ມູນຄ່າການຈໍລະຈອນສິນຄ້າ ມີ 36.393 ຕື້ກີບເທົ່າກັບ 53,65% ຂອງແຜນການ; ມູນຄ່າການສົ່ງອອກ-ນຳເຂົ້າ ປະຕິບັດໄດ້ 7.280 ລ້ານໂດລາ ເທົ່າກັບ 53,33% ຂອງແຜນການ; ຂະແໜງການບໍລິການໄດ້ຂະຫຍາຍຕົວ 4,2% ແຜນການ 4,5% ໃນນີ້ການສົ່ງເສີມລາວທ່ຽວລາວ ເຊິ່ງເຮັດໃຫ້ມີນັກທ່ອງທ່ຽວພາຍໃນ 463.907 ເທື່ອຄົນ ເທົ່າກັບ 43,52% ຂອງແຜນການ; ການຂົນສົ່ງສິນຄ້າ ເທົ່າກັບ 63,31% ຂອງແຜນການ ແລະ ການຂົນສົ່ງໂດຍສານ ເທົ່າກັບ 61,33% ຂອງແຜນການ; ຂະແໜງພາສີອາກອນຂະຫຍາຍຕົວ 4,3% ແຜນການ 4% ແລະ ປະກອບສ່ວນເຂົ້າໃນການຂະຫຍາຍຕົວ 0,4%.

2) ງົບປະມານສາມາດເກັບລາຍຮັບທັງໝົດໄດ້ 10.633,89 ຕື້ກີບ ເທົ່າກັບ 33,66% ເພີ່ມຂຶ້ນ 23,7% ຫລື ເທົ່າກັບ 2.037,36 ຕື້ກີບ ແລະ ລາຍຈ່າຍທັງໝົດ ໄດ້ 8.849,47 ຕື້ກີບ ເທົ່າກັບ 27,24% ຂອງແຜນການ.

3) ດ້ານເງິນຕາ: ປະລິມານເງິນ M2 ສືບຕໍ່ຂະຫຍາຍຕົວໃນລະດັບ 18,39% ທຽບໃສ່ໄລຍະດຽວຂອງປີຜ່ານມາ, ແຕ່ຖ້າລວມປັດໄຈການປ່ຽນແປງດ້ານອັດຕາແລກປ່ຽນແມ່ນຂະຫຍາຍຕົວ 40,75% ທຽບໃສ່ໄລຍະດຽວຂອງປີຜ່ານມາ; ອັດຕາແລກປ່ຽນ (ທຽບໃສ່ທ້າຍປີ 2021) ເງິນກີບທຽບເງິນໂດລາ ອ່ອນຄ່າ 7,79% ແລະ ທຽບເງິນບາດອ່ອນຄ່າ 8,43%; ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຂອງທະນາຄານ ແລະ ຕະຫລາດນອກລະບົບ ສະເລ່ຍຢູ່ໃນລະດັບ 9,01% ສຳລັບອັດຕາເງິນກີບທຽບເງິນໂດລາ ແລະ ຢູ່ໃນລະດັບ 2,94% ສຳລັບອັດຕາເງິນກີບທຽບໃສ່ເງິນບາດ; ອັດຕາເງິນເຟີ້ສະເລ່ຍ 5 ເດືອນ ຢູ່ໃນລະດັບ 9%, ຄັງສຳຮອງເງິນຕາຕ່າງປະເທດ ຮອດທ້າຍເດືອນພຶດສະພາ ສາມາດກຸ້ມການນຳເຂົ້າໄດ້ 4,17 ເດືອນ; ຍອດເຫລືອເງິນຝາກຂອງທະນາຄານທຸລະກິດກວມເອົາ 82,36% ຂອງ GDP; ຍອດເຫລືອສິນເຊື່ອຂອງຂະແໜງການທະນາຄານກວມເອົາ 54,85% ຂອງ GDP; ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ (NPLs) ຢູ່ໃນລະດັບ 2,22%.

4) ການລົງທຶນ: ການລົງທຶນຈາກງົບປະມານລັດ ໃນປີ 2022 ໄດ້ຮັບການອະນຸມັດທັງໝົດ 3.950 ຕື້ກີບ (ມະຕິສະພາ), ເຊິ່ງສ່ວນໃຫຍ່ແມ່ນໂຄງການສືບຕໍ່ ແລະ ໂຄງການໜີ້ສິນ, ປັດຈຸບັນແມ່ນພວມດຳເນີນຕາມຂັ້ນຕອນທີ່ກຳນົດໄວ້, ສຳລັບໂຄງການສະເໜີໃໝ່ສ່ວນຫລາຍແມ່ນກຳລັງຈັດຕັ້ງປະຕິບັດ ແລະ ຢູ່ໃນຂັ້ນຕອນການກະກຽມເອກະສານຕາມລະບຽບການກຳນົດ. ການຊ່ວຍເຫລືອທາງການເພື່ອການພັດທະນາ ມີ 162,04 ລ້ານໂດລາ ຫລື ເທົ່າກັບ 1.677,06 ຕື້ກີບ ເທົ່າກັບ 24,84% ຂອງແຜນການ, ໃນນີ້ ການຊ່ວຍເຫລືອລ້າ 666,08 ຕື້ກີບ ເທົ່າກັບ 27,07% ຂອງແຜນການ ແລະ ການກູ້ຢືມ 1.010,98 ຕື້ກີບ ເທົ່າກັບ 23,56% ຂອງແຜນການ. ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ແມ່ນສາມາດອະນຸມັດການລົງທຶນທັງໝົດ 88.370,53 ຕື້ກີບ, ໃນນີ້ ມີທຶນນຳເຂົ້າຕົວຈິງ 21.864,87 ຕື້ກີບ ເທົ່າກັບ 74% ຂອງແຜນການ.

**2. ເປົ້າໝາຍທີ 2:** ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ.

1) ວຽກງານການສຶກສາ ແລະ ກິລາ: ຄາດວ່າຄາດໝາຍຂອງຂະແໜງສຶກສາ ແລະ ກິລາ ມີ 7 ຕົວຊີ້ບອກທີ່ສາມາດບັນລຸໄດ້ຕາມແຜນ ແລະ ມີ 08 ຕົວຊີ້ບອກ ມີຄວາມສ່ຽງທີ່ຈະບໍ່ບັນລຸໄດ້, ເຖິງຢ່າງໃດກໍຕາມການຮຽນ, ການສອນໄດ້ດຳເນີນຕາມສະພາບ ຂອງການລະບາດໂຄວິດ-19 ໃນແຕ່ລະໄລຍະ ແລະ ດ້ວຍຄວາມພະຍາຍາມສູງສົມຄວນ;

2) ວຽກງານສາທາລະນະສຸກ: ຄາດໝາຍສູ້ຊົນ ຂອງຂະແໜງສາທາລະນະສຸກ ມີ 5 ຕົວຊີ້ບອກ, ຄາດວ່າຈະບັນລຸຕາມແຜນ ແລະ ມີ 6 ຕົວຊີ້ບອກມີຄວາມທ້າທາຍທີ່ຈະບໍ່ບັນລຸຕາມແຜນ, ການເຝົ້າລະວັງ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ-19 ໄດ້ສືບຕໍ່ດຳເນີນຢ່າງເປັນລະບົບ ໂດຍເລັ່ງສັກວັກຊີນກັນພະຍາດເປັນວຽກຕົ້ນຕໍ. ເຊິ່ງມາຮອດ

ອ່ານຕໍ່ສະບັບໜ້າ...

## 5 ເດືອນ...

ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 5 ເດືອນ ແລະ ຄາດຄະເນ 6 ເດືອນຕົ້ນປີ 2022 ແມ່ນດຳເນີນໃນສະພາບການສືບຕໍ່ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ສະສົມມາຍາວນານ, ບັນຫາໜີ້ສິນສາທາລະນະທີ່ມີຄວາມກົດດັນສູງສົມຄວນ ແລະ ສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ແກ່ຍາວ ບວກກັບສະພາບຂອງພາກພື້ນ ແລະ ສາກົນ ທີ່ຜັນແປໄປຢ່າງສະລັບສັບຊ້ອນ ໂດຍສະເພາະທີ່ພາໃຫ້ສະພາບລາຄາພະລັງງານມີການເໜັງຕີງແຮງ, ໄພເງິນເຟີ້ຂອງບັນດາປະເທດທີ່ມີເສດຖະກິດຂະຫຍາຍຕົວ, ລາຄາສິນຄ້າ ແລະ ບໍລິການເພີ່ມຂຶ້ນສູງໃນຮອບຫລາຍສິບປີ, ຊຶ່ງມີຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຫຍຸ້ງຍາກສົມຄວນ, ແຕ່ເຖິງຢ່າງໃດກໍ່ຕາມ, ປະເທດພວກເຮົາກໍຍັງມີທ່າແຮງບົ່ມຊ້ອນ ແລະ ກາລະໂອກາດຈຳນວນໜຶ່ງ ໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ເປັນຕົ້ນ ແມ່ນມາດຕະການທີ່ກຳນົດໄວ້ໃນທ້າຍປີ 2021 ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໄດ້ລື່ນແຜນການ ໃນປີ 2021 ເຮັດໃຫ້ການຮັບມື ກໍຄືການຈັດຕັ້ງປະຕິບັດມາດຕະການຕ່າງໆທີ່ວາງໄວ້ໄດ້ຮັບການຈັດຕັດຕັ້ງປະຕິບັດປາກົດຜົນເປັນຈິງຫລາຍດ້ານ ເຊິ່ງສາມາດສະຫລຸບຕີລາຄາ ໃນແຕ່ລະດ້ານ ດັ່ງນີ້:

1) ການຈັດຕັ້ງປະຕິບັດມາດຕະການຈັດເກັບລາຍຮັບ

ຜົນໄດ້ຮັບຈາກມາດຕະການໃນການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລ ແລະ ການຈັດເກັບລາຍຮັບງົບປະມານແຫ່ງລັດ ດັ່ງນີ້:

(1) ແກ້ໄຂການຮົ່ວໄຫລ ແລະ ການເກັບລາຍຮັບ ຈາກການນຳເຂົ້າສິນຄ້າເຄື່ອງຂອງ:

- ໄດ້ດຳເນີນການແກ້ໄຂການຮົ່ວໄຫລຈາກການແຈ້ງພາສີໂດຍດັດສົມຜູ້ບໍລິການແຈ້ງພາສີ ແລະ ຜູ້ແຈ້ງພາສີທົ່ວໄປທີ່ບໍ່ມີເງື່ອນໄຂ ທີ່ພາໃຫ້ເກີດຊ່ອງວາງການຫລົບຫລີກພາສີ-ອາກອນ ຜ່ານດ່ານພາສີໃນໄລຍະຜ່ານມາ ດ້ວຍຫລາຍຮູບແບບ ເຊັ່ນ: ການແຈ້ງຊະນິດສິນຄ້າເຄື່ອງຂອງບໍ່ຖືກຕ້ອງ, ບໍລິມາດ, ປະລິມານ, ມູນຄ່າແຈ້ງ ແລະ ການສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ຂອງລັດ ເຮັດໃຫ້ການເກັບລາຍຮັບມີການຕົກເຮ່ຍເສຍຫາຍ ດ້ວຍການອອກມາດຕະການຍົກເລີກລະຫັດຜູ້ນຳໃຊ້ ຈາກ 2.519 ຫົວໜ່ວຍ ຍັງເຫລືອ 159 ຫົວໜ່ວຍ ແລະ ຈາກ 1.372 ບໍລິສັດ ມາເປັນ 102 ບໍລິສັດ ຕາມເງື່ອນໄຂມີການຄ້ຳປະກັນນຳລັດຖະການພາສີ ເປັນວົງເງິນ 500 ລ້ານກີບ ຂຶ້ນໄປເພື່ອເປັນການບັງຄັບໃຊ້ກົດໝາຍຕໍ່ຜູ້ບໍລິການແຈ້ງພາສີທີ່ລະເມີດກົດໝາຍວ່າດ້ວຍພາສີ;

- ໄດ້ປະຕິບັດກົນໄກ, ລະບຽບການ ເພື່ອແກ້ໄຂການຮົ່ວໄຫລຂອງລາຍຮັບ ຈາກການນຳເຂົ້າ ເຄື່ອງກໍ່ສ້າງ, ເຄື່ອງໄຟຟ້າ, ເຄື່ອງອຸປະໂພກ-ບໍລິໂພກ ໃນໄລຍະຜ່ານມາໂດຍນຳໃຊ້ລະບົບທີ່ທັນສະໄໝໃນການແຈ້ງພາສີແບບເອເລັກໂຕຣນິກ, ການຄຸ້ມຄອງສາງສິນຄ້າ, ການເຊື່ອມໂຍງຂໍ້ມູນການບັນທຶກການຊື້-ຂາຍ ເພື່ອດັດສົມບໍລິສັດຂາເຂົ້າ-ຂາອອກ ທີ່ເຄື່ອນໄຫວບໍ່ຖືກຕາມກົດໝາຍ ແລະ ລະບຽບການ ໃຫ້ເຂົ້າສູ່ການປະຕິບັດກົດໝາຍຢ່າງເຂັ້ມງວດ, ຕົວຢ່າງ: ໄດ້ເຮັດທົດລອງຄຸ້ມຄອງແບບເອເລັກໂຕຣນິກ ໃນ 4 ບໍລິສັດຂາເຂົ້າ-ຂາອອກລາຍໃຫຍ່ສາມາດເກັບລາຍຮັບໄດ້ ເພີ່ມຂຶ້ນ 9 ຕື້ກີບ ຈາກ 4 ຕື້ກີບ ມາເປັນ 13 ຕື້ກີບ ສະເພາະແຕ່ 1 ບໍລິສັດ;

- ໄດ້ປະຕິບັດກົນໄກ, ລະບຽບການ ເພື່ອແກ້ໄຂການເກັບລາຍຮັບຈາກການນຳເຂົ້ານ້ຳມັນເຊື້ອໄຟ ໂດຍນຳໃຊ້ລະບົບທີ່ທັນສະໄໝໃນການແຈ້ງພາສີແບບເອເລັກໂຕຣນິກ ໃນການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ, ສາງນ້ຳມັນເຊື້ອໄຟ, ການບັນທຶກການຊື້-ຂາຍ ເຊື່ອມໂຍງກັບລະບົບການຄຸ້ມຄອງເກັບລາຍຮັບສ່ວຍສາອາກອນ (TxKIS) ເຮັດໃຫ້ການຄຸ້ມຄອງເກັບລາຍຮັບມີຄວາມຮັບປະກັນ, ຖືກຕ້ອງ, ຄົບຖ້ວນ ເຮັດໃຫ້ລາຍຮັບເພີ່ມທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫລາຍເທົ່າ ຫລື ທຽບເປັນເງິນ 309 ຕື້ກີບ; ພ້ອມນັ້ນ, ກໍໄດ້ອອກລະບຽບການຄຸ້ມຄອງການເຄື່ອນຍ້າຍພາຍໃນ ເພື່ອສະກັດກັ້ນຕ້ານການລັກລອບ-ຫລົບຫລີກພາສີທຸກກໍລະນີ ຈາກການນຳເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ;

- ໄດ້ອອກລະບຽບການ ເພື່ອຍຸດຕິໃນການນຳເຂົ້າສິນຄ້າ-ເຄື່ອງຂອງແບບລາຍຍ່ອຍຂອງບຸກຄົນທົ່ວໄປແລ້ວຫັນໄປແຈ້ງພາສີເປັນລາຍລະອຽດ ໃນທຸກດານພາສີຊາຍແດນ ໃນຂອບເຂດທົ່ວປະເທດ ເຮັດໃຫ້ສາມາດເກັບລາຍຮັບໄດ້ 312 ຕື້ກວ່າກີບ.

(2) ໄດ້ແກ້ໄຂພາຫະນະນຳເຂົ້າບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ ສາມາດແກ້ໄຂແລ້ວທັງໝົດ 20.773 ຄັນ (ລົດໃຫຍ່ 11.016 ຄັນ, ລົດຈັກ 9,757 ຄັນ) ເກັບລາຍຮັບໄດ້ 314 ຕື້ກີບ ແລະ ຈະສືບຕໍ່ແກ້ໄຂຕື່ມ 9.698ຄັນ (ລົດໃຫຍ່ 1.229 ຄັນ, ລົດຈັກ 8.469 ຄັນ) ທີ່ໄດ້ຂຶ້ນບັນຊີແລ້ວ ເປັນເງິນ 77 ຕື້ກີບ ເພື່ອສືບຕໍ່ໃຫ້ມາຊຳລະຄ່າພາສີ-ອາກອນໃຫ້ສຳເລັດ ໃນທ້າຍເດືອນມິຖຸນາ 2022;

(3) ໄດ້ສ້າງຖານລາຍຮັບໃໝ່ຈາກການນຳໃຊ້ທ່າແຮງການຂົນສິນຄ້າຜ່ານທາງລົດໄຟລາວ-ຈີນ ເປັນຕົ້ນ ການເກັບຄ່າບໍລິການຕູ້ຄອນເທນເນີ ເປັນລາຍຮັບງົບປະມານຈຳນວນ 8,69 ຕື້ກີບ;

(4) ໄດ້ດຳເນີນການຂະຫຍາຍຖານອາກອນມູນຄ່າເພີ່ມ (ອມພ) ໄດ້ທັງໝົດຈຳນວນ 6.436 ຫົວໜ່ວຍ ໃນຈຳນວນທັງໝົດ 14.657 ຫົວໜ່ວຍ ໃນຂອບເຂດທົ່ວປະເທດ ກຳລັງດຳເນີນການນຳໃຊ້ໂປຣແກຣມບັນຊີ ແລະ ຕິດຕັ້ງໃຫ້ຫົວໜ່ວຍວິສາຫະກິດທີ່ນອນໃນລະບົບ ອມພ ຂ້າງເທິງ ເຊື່ອມຕໍ່ກັບລະບົບ TaxRIS ແລະ ຄາດຄະເນຂະຫຍາຍຖານອາກອນໃຫ້ສຳເລັດຈຳນວນທີ່ຍັງເຫລືອຮອດທ້າຍປີ 2022 ເພື່ອສ້າງລາຍຮັບທົດແທນ ຈາກການປັບຫລຸດອັດຕາ ອມພ 10% ມາເປັນ 7%;

(5) ໄດ້ຂະຫຍາຍຖານລາຍຮັບ ອາກອນກຳໄລ ເພີ່ມຂຶ້ນ 31% ຫລື ເປັນເງິນເທົ່າກັບ 217 ຕື້ກີບ, ຖານອາກອນລາຍໄດ້ ເພີ່ມຂຶ້ນ 10% ຫລື ເປັນເງິນເທົ່າກັບ 32 ຕື້ກີບ, ຖານອາກອນຊົມໃຊ້ (ອກຊ) ເພີ່ມຂຶ້ນ 55% ຫລື ເປັນເງິນ ເທົ່າກັບ 398 ຕື້ກີບ ແລະ ຖານອາກອນຈມລະວິສາຫະກິດ ເພີ່ມຂຶ້ນ 17% ຫລື ເປັນເງິນເທົ່າກັບ 11 ຕື້ກີບ. ສຳລັບຖານລາຍຮັບຂອງຂະແໜງພາສີ ຈາກປະເພດນ້ຳມັນເຊື້ອໄຟ ເພີ່ມຂຶ້ນ 49,5% ເປັນເງິນເທົ່າກັບ 311 ຕື້ກີບ, ເຄື່ອງອຸປະໂພກ-ບໍລິໂພກ ເພີ່ມຂຶ້ນ 9,18% ເປັນເງິນເທົ່າກັບ 21 ຕື້ກີບ, ເຄື່ອງກໍ່ສ້າງ ເພີ່ມຂຶ້ນ 5,35% ເປັນເງິນເທົ່າກັບ 2 ຕື້ກີບ ແລະ ເຄື່ອງໃຊ້ໄຟຟ້າ ເພີ່ມຂຶ້ນ 5,57% ເປັນເງິນເທົ່າກັບ 1 ຕື້ກີບ.

(6) ການເກັບລາຍຮັບຈາກຖານໃໝ່ໃນການຈັດຕັ້ງປະຕິບັດການເກັບລາຍຮັບຈາກການທົດລອງສົ່ງອອກແຮ່ທາດແບບເດັດຖານ ມີທັງໝົດ 50 ໂຄງການ ໄດ້ວາງເງິນມັດຈຳທັງໝົດ 45,2 ລ້ານໂດລາ ແລະ 255 ຕື້ກີບ;

- ກຳລັງມີແຜນສົ່ງອອກ ຈຳນວນ 14 ບໍລິສັດ ບໍລິມາດ 9,18 ລ້ານໂຕນ ຄາດຄະເນຈະໄດ້ລາຍຮັບເຂົ້າງົບປະມານຕໍ່າສຸດບໍ່ຫລຸດ 200 ລ້ານໂດລາ ສຫລ;

- ໄດ້ສົ່ງອອກແລ້ວມີຈຳນວນ 5 ບໍລິສັດ ບໍລິມາດ 279.000 ໂຕນ ແລະ ໄດ້ມອບພັນທະເຂົ້າງົບປະມານ 8,83 ລ້ານໂດລາ ສຫລ.

(7) ການເກັບລາຍຮັບຈາກຖານໃໝ່ໃນການຈັດຕັ້ງປະຕິບັດການທົດລອງດຳເນີນທຸລະກິດ ກ່ຽວກັບຊັບສິນດິຈິຕອນ (ເງນຄຣິບໂຕ):

- ປະຈຸບັນ ໄດ້ຮັບອະນຸມັດດຳເນີນທຸລະກິດດັ່ງກ່າວ ຈຳນວນ 13 ບໍລິສັດ, ໃນນັ້ນ: ມີ 11 ບໍລິສັດ ດຳເນີນທຸລະກຳຊັບສິນດິຈິຕອນ, ໄດ້ມອບຄ່າລິຂະສິດໃນການອະນຸຍາດດຳເນີນທຸລະກິດຂຸດຄົ້ນເງິນຄຣິບໂຕແລ້ວ ຈຳນວນ 10 ບໍລິສັດ ເປັນເງິນໂດລາ ຈຳນວນ 4,5 ລ້ານໂດລາ ສຫລ ແລະ ເປັນເງິນກີບຈຳນວນ 5,71 ຕື້ກີບ; ໃນນີ້: ມີ2 ບໍລິສັດ ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປລາວ ເປັນສູນຊື້-ຂາຍເງນຄຣິບໂຕ, ເຊິ່ງຈະຕ້ອງໄດ້ມອບຄ່າລິຂະສິດບໍລິສັດລະ 1 ລ້ານໂດລາ ສຫລ;

- ຈັດເກັບລາຍຮັບຈາກບໍລິສັດ ວາບດາຕາ ເຕັກໂນໂລຊີ ລາວ ທີ່ໄດ້ດຳເນີນທຸລະກິດການຂຸດຄົ້ນເງິນຄຣິບໂຕ ທີ່ມອບພັນທະແບບອາກອນມອບເໝົາ (ອາກອນກຳໄລ ແລະ ອາກອນມູນຄ່າເພີ່ມ) ງວດ 1 ຂອງປີ 2022 ຈຳນວນ 6,50 ລ້ານໂດລາ ແລະ ຄາດວ່າງວດທີ 2 ຈຳນວນ 6,50 ລ້ານໂດລາ ຈະມອບໃນທ້າຍເດືອນມິຖຸນາ 2022;

- ສຳລັບການເກັບລາຍຮັບຕາມສັນຍາ 10 ເມັກກາວັດ ຕໍ່ 1 ລ້ານໂດລາ ແລະ ອາກອນມອບເໝົາ 15% ຂອງລາຍຮັບທຸລະກິດທັງໝົດ ແມ່ນພວມດຳເນີນການກວດກາ ເພື່ອເກັບລາຍຮັບຕາມການເຄື່ອນ

ອ່ານຕໍ່ສະບັບໜ້າ...

# ການເຄື່ອນໄຫວວຽກງານ ສພຂ ສາລະວັນ



(ສພຊ) ໃນຕອນເຊົ້າ ວັນທີ 26 ພຶດສະພາ 2022 ທີ່ສະໂມສອນແຂວງສາລະວັນ ໄດ້ເປີດກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ (ສພຂ) ກັບແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນແຂວງສາລະວັນ ໂດຍການເປັນປະທານຮ່ວມຂອງທ່ານ ສີເຮັງ ຫອມສົມບັດ ປະທານ ສພຂ ແລະ ທ່ານ ຄຳຕາ ໂຮ່ຊົງເລືອງ ປະທານອົງການແນວລາວສ້າງຊາດແຂວງສາລະວັນ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ; ມີຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ອົງການຈັດຕັ້ງມະຫາຊົນ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ, ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ໄດ້ລາຍງານການເຄື່ອນໄຫວວຽກງານໃນຜ່ານມາ ພ້ອມທັງຜັດປ່ຽນກັນປະກອບຄຳຄິດຄຳເຫັນໄດ້ລົງເລິກໃສ່ບາງບັນຫາທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຕາມພາລະບົດບາດຂອງ ສພຂ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນແຂວງສາລະວັນ ເຊິ່ງໄດ້ຮ່ວມກັນແລກປ່ຽນຄຳຄິດຄຳເຫັນພ້ອມທັງສະເໜີແນະກ່ຽວກັບບັນຫາພື້ນຖານຂອງທ້ອງຖິ່ນທີ່ປະຊາຊົນໄດ້ສະເໜີຜ່ານສະມາຊິກສະພາປະຊາຊົນແຂວງ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເຖິງອົງການປົກຄອງແຂວງໃຫ້ມີການປັບປຸງແກ້ໄຂ ເປັນຕົ້ນການແກ້ໄຂຄວາມທຸກຍາກ, ບັນຫາລາຄາສິນຄ້າ, ລາຄານ້ຳມັນເຊື້ອໄຟ ທີ່ເພີ່ມຂຶ້ນ ແລະ ບັນຫາອື່ນໆ ທີ່ກ່ຽວພັນກັບການປະຕິບັດກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ.

ທັງນີ້, ເພື່ອເຮັດໃຫ້ການປະຕິບັດມະຕິຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ເວົ້າສະເພາະແມ່ນການປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກທິດ ທັງເປັນການສ່ອງແສງ ແລະ ປຶກສາຫາລືກັນຮ່ວມກັນເພື່ອຊຸກຍູ້ ໃຫ້ພາກສ່ວນກ່ຽວຂ້ອງ ແກ້ໄຂບັນຫາດ້ວຍຄວາມຮັບຜິດຊອບສູງຕາມກົດໝາຍກຳນົດໄວ້.

ຕອນບ່າຍຂອງວັນທີ 26 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມຮັບຮອງສະໂມສອນແຂວງ, ຄະນະປະສານງານປົກປ້ອງກົດໝາຍແຂວງສາລະວັນ ສະຫລຸບປະຈຳປີ 2021 ໂດຍການເປັນປະທານກອງປະຊຸມຂອງທ່ານ ສີເຮັງ ຫອມສົມບັດ ປະທານ ສພຂ ສາລະວັນ, ປະທານຄະນະປະສານງານປົກປ້ອງກົດໝາຍຂັ້ນແຂວງ; ມີບັນດາທ່ານຄະນະປະສານງານ ແລະ ກອງເລຂາຄະນະປະສານງານປົກປ້ອງກົດໝາຍ ຈາກກົມກອງ ແລະ ພະແນກການອ້ອມຂ້າງແຂວງ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ຜ່ານຮ່າງບົດສະຫລຸບຕີລາຄາການເຄື່ອນໄຫວວຽກງານຮອບດ້ານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ເຊິ່ງຄະນະປະສານງານປົກປ້ອງກົດໝາຍແຂວງສາລະວັນ ແມ່ນອົງການໜຶ່ງທີ່ເປັນເສນາທິການສະເພາະໃຫ້ແກ່ຄະນະປະຈຳພັກແຂວງ ມີຄະນະ ແລະ ກອງເລຂາຊ່ວຍທັງໝົດຈຳນວນ 36 ສະຫາຍ ທີ່ມາຈາກພາກສ່ວນກ່ຽວຂ້ອງ ແລະ ຂົງເຂດຕຸລາການ ໄດ້ປະຕິບັດພາລະບົດບາດຕາມຂໍ້ຕົກລົງຂອງຄະນະປະຈຳພັກແຂວງສາລະວັນ ສະບັບເລກທີ 93/ຄຈສຂ.ສວ, ລົງວັນທີ 5/10/2021 ວ່າດ້ວຍການຈັດຕັ້ງການເຄື່ອນໄຫວຂອງຄະນະປະສານງານປົກປ້ອງກົດໝາຍຂັ້ນແຂວງ ຕະຫລອດໄລຍະ 1 ປີຜ່ານມາ ໄດ້ອອກຄຳແນະນຳກ່ຽວກັບການແຕ່ງຕັ້ງຄະນະປະສານງານປົກປ້ອງກົດໝາຍຂັ້ນເມືອງໃນ 8 ຕົວເມືອງ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຈຳນວນ 6 ເລື່ອງ ສາມາດຄົ້ນຄວ້າໃນກອງປະຊຸມ ແລະ ມອບໃຫ້ພາກສ່ວນກ່ຽວຂ້ອງນຳໄປແກ້ໄຂຕາມພາລະບົດບາດ; ພ້ອມນັ້ນ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະ 1 ປີຜ່ານມາ ຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳ; ຜ່ານແຜນການດຳເນີນການເຄື່ອນໄຫວຂອງຄະນະປະສານງານປົກປ້ອງກົດໝາຍຂັ້ນແຂວງ; ແຜນການເຄື່ອນໄຫວວຽກງານ 6 ເດືອນທ້າຍປີ 2022 ຂອງຄະນະປະສານງານປົກປ້ອງກົດໝາຍຂັ້ນແຂວງ.

ຈາກນັ້ນ, ໄດ້ພ້ອມກັນປະກອບຄຳຄິດຄຳເຫັນ ແລະ ຄົ້ນຄວ້າປຶກສາຫາລືດ້ວຍຄວາມເປັນເອກະພາບ ເພື່ອເຮັດໃຫ້ແຜນການໃນຕໍ່ໜ້າໄດ້ບັນລຸ ໂດຍສະເພາະການຮ່ວມກັນແກ້ໄຂຄຳຮ້ອງທຸກຂອງປະຊາຊົນໃຫ້ໄດ້ຮັບການແກ້ໄຂບົນພື້ນຖານຄວາມຍຸຕິທຳ, ຮັກສາໄດ້ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຄວາມວ່ອງໄວທັນການແລະສອດຄ່ອງຕາມກົດໝາຍ, ເຮັດໃຫ້ການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະສານງານປົກປ້ອງກົດໝາຍຂັ້ນແຂວງ ໃນການຊຸກຍູ້, ຕິດຕາມ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

(ນາງຄັດສອນ ຮຸ່ງສະຫວ່າງ ແລະ ດີລຳພົນ ພົມມະຈັນ)



# ຄົ້ນຄວ້າ, ປຶກສາຫາລືການປັບປຸງກົງຈັກ ແລະ ກຳນົດຕຳແໜ່ງງານຂອງ ສພຂ




(ສພຊ) ໃນວັນທີ 23 ພຶດສະພາ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງພະບາງ ໄດ້ຈັດກອງປະຊຸມຄົ້ນຄວ້າປຶກສາຫາລືການປັບປຸງກົງຈັກ ແລະ ກຳນົດຕຳແໜ່ງງານຂອງ ສພຂ ຫລວງພະບາງ ໂດຍການເປັນປະທານຮ່ວມຂອງທ່ານ ຄຳຫລ້າ ລຽນປະດິດ ປະທານກວດກາພັກ-ລັດແຂວງ ແລະ ທ່ານ ສິງຕັນ ໄຊລືຊົງ ຮອງປະທານ ສພຂ; ມີຄະນະປັບປຸງກົງຈັກຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ສພຂ ເຂົ້າຮ່ວມທັງໝົດ 45 ທ່ານ ຍິງ 19 ທ່ານ.

ໃນກອງປະຊຸມຄັ້ງນີ້, ໄດ້ຮັບຟັງການເຜີຍແຜ່ ມະຕິເລກທີ 07/ກມສພ, ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 190/ຄລສພ, ຄຳແນະນຳຂອງທ່ານນາຍົກລັດຖະມົນຕີ ເລກທີ 01/ນຍ ແລະ ຄຳສັ່ງ ສະບັບເລກທີ 07/ຄປພຂ.ຫລບ, ລົງວັນທີ 8 ພະຈິກ 2021 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງຂອງບັນດາພະແນກການ, ກົມກອງ, ອົງການທຽບເທົ່າຂັ້ນແຂວງ, ຂັ້ນເມືອງ, ນະຄອນໃນທົ່ວປະເທດ. ຈາກນັ້ນ, ຍັງໄດ້ຄົ້ນຄວ້າເນື້ອໃນທີ່ສຳຄັນໃນການປັງປຸງພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະຂະແໜງທີ່ສູນກາງ ຫລື ອົງການສາຍຕັ້ງໄດ້ກຳນົດໃຫ້ຄືນໃໝ່ ວ່າມີຄວາມເໝາະສົມ, ຖືກຕ້ອງສອດຄ່ອງ ກັບນິຕິກຳທີ່ກຳນົດ ຫລື ສະພາບ, ຈຸດພິເສດເງື່ອນໄຂຕົວຈິງຂອງແຂວງຫລວງພະບາງແລ້ວບໍ່ ພາຍຫລັງກວດກາຄືນແລ້ວ ຖ້າພົບເຫັນຈຸດໃດທີ່ຍັງບໍ່ທັນຈະແຈ້ງ ຫລື ບໍ່ສອດຄ່ອງ ໃຫ້ຄົ້ນຄວ້າປັບປຸງຄືນໃຫ້ຈະແຈ້ງ ແລະ ສອດຄ່ອງຍິ່ງຂຶ້ນ; ຄົ້ນຄວ້າປັບປຸງໂຄງປະກອບກົງຈັກຊ່ວຍວຽກໃຫ້ກະທັດຮັດ ສົມເຫດສົມຜົນ, ມີປະສິດທິພາບ, ຫລີກລ່ຽງກົງຈັກໃຫຍ່ໂຕ; ການດຳເນີນການຂຽນຕຳແໜ່ງງານຕ້ອງວິເຄາະ, ວິໄຈຢ່າງລະອຽດຖີ່ຖ້ວນ ແລະ ບັນຈຸສັບຊ້ອນພະນັກງານ-ລັດຖະກອນ ໃສ່ຕາມກຳນົດຕຳແໜ່ງງານຕົວຈິງ, ຕາມວິຊາສະເພາະ, ຕາມຄວາມຮູ້ຄວາມສາມາດ ແລະ ເງື່ອນໄຂຕົວຈິງຂອງພະນັກງານ-ລັດຖະກອນ.

ໃນຕອນທ້າຍ, ປະທານກອງປະຊຸມຍັງໄດ້ມີຄຳເຫັນຕໍ່ກັບການຈັດວາງພະນັກງານ-ລັດຖະກອນ ເຊິ່ງເປັນວຽກທີ່ສຳຄັນລະອຽດອ່ອນຂອງຄະນະພັກ ແລະ ອົງການຈັດຕັ້ງຕ້ອງໄດ້ເຮັດວຽກງານນຳພາການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ ໃຫ້ຫລາຍຂຶ້ນກວ່າເກົ່າ ເພື່ອເຮັດໃຫ້ການປັບປຸງກົງຈັກການຈັດຕັ້ງຄັ້ງນີ້ຈະສຳເລັດຕາມແຜນ ແລະ ລະດັບຄາດໝາຍ.

(ນາງ ຄຳຫລ້າ ພອນພິລາ)

# ກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫລວງນ້ຳທາ



(ສພຊ) ຕອນເຊົ້າວັນທີ 27 ພຶດສະພາ 2022 ທີ່ຫ້ອງປະຊຸມ ສພຂ ຫລວງນ້ຳທາ, ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ເປີດກອງປະຊຸມຄົ້ນຄວ້າ, ປຶກສາຫາລື ແລະ ກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ທີ່ຈະນຳເຂົ້າກອງປະຊຸມຮ່ວມກັບອົງການປົກຄອງແຂວງໃນຕໍ່ໜ້າ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມະນີ ປະທານ ສພຂ; ມີຄະນະຮອງປະທານ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ, ບັນດາທ່ານຜູ້ແທນໄດ້ປະກອບຄຳຄິດເຫັນ, ຄົ້ນຄວ້າ, ປຶກສາຫາລື, ກະກຽມ ແລະ ເປັນເອກະພາບກັນຕໍ່ກັບແຜນດຳເນີນງານໃນການກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ທີ່ຈະນຳເຂົ້າໃນກອງປະຊຸມຮ່ວມກັບອົງການປົກຄອງແຂວງໃນຕໍ່ໜ້າ ເພື່ອຈະໄດ້ພ້ອມກັນປຶກສາຫາລື, ຄົ້ນຄວ້າ, ກະກຽມ ແລະ ຕົກລົງເປັນເອກະພາບກັນ ເພື່ອເຮັດໃຫ້ເນື້ອໃນທີ່ນຳເຂົ້າໃນກອງປະຊຸມຄັ້ງນີ້ ມີເນື້ອໃນຄົບຖ້ວນສົມບູນ ຮັບປະກັນຄຸນນະພາບ, ສອດຄ່ອງກັບສະພາບຕົວຈິງ ເພື່ອຮັບປະກັນໃຫ້ເນື້ອໃນດັ່ງກ່າວ ສາມາດນຳເຂົ້າຄົ້ນຄວ້າ, ພິຈາລະນາ ແລະ ທ່ວງທັນກັບເວລາ ຕາມກຳນົດທີ່ວາງໄວ້.

(ວັນນີ ແຝງບົວວັນ)

# ສພຂ ອັດຕະປື ທາບທາມຄຳເຫັນໃສ່ຮ່າງກົດໝາຍ




(ສພຊ) ຄັ້ງວັນທີ 26 ພຶດສາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ມີການຈັດກອງປະຊຸມທາບທາມຮ່າງກົດໝາຍ 4 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບສິນຂອງລັດ (ປັບປຸງ), ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍວິຈິດສິນ (ສ້າງໃໝ່) ແລະ ຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ປັບປຸງ) ໂດຍເປັນປະທານຂອງທ່ານ ນາງ ມິນາພອນ ໄຊສົມພູ ປະທານ ສພຂ; ເຂົ້າຮ່ວມມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 5 ເມືອງ, ພະແນກການ, ອົງການທຽບເທົ່າຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນເຂົ້າຮ່ວມທັງໝົດ 38 ທ່ານ ຍິງ 8 ທ່ານ.

ກອງປະຊຸມທາບທາມຮ່າງກົດໝາຍດັ່ງກ່າວ ປະທານໄດ້ມີຄຳເຫັນເຈາະຈີ້ມບາງບັນຫາ ແລະ ຜູ້ແທນກອງປະຊຸມໄດ້ປະກອບຄຳຄິດ, ຄຳເຫັນໃສ່ຮ່າງກົດໝາຍດັ່ງກ່າວ ຢ່າງພ້ອມພຽງ, ກົງໄປກົງມາ ແລະ ເລິກເຊິ່ງ.

(ຈັນທະຈອນ ໂກພິຈິດ)

# ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ການຈັດຕັ້ງປະຕິບັດ ແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ



(ສພຊ) ການແຜ່ລະບາດຂອງພະຍາດໂຄວິ-19 ໃນໄລຍະຜ່ານມາ ເຮັດໃຫ້ມີຜົນກະທົບຫລາຍໆດ້ານຕໍ່ກັບປະເທດຊາດ ກໍຄືແຂວງອັດຕະປື ເຊິ່ງໄດ້ຮັບຜົນກະທົບຢ່າງໜັກໜ່ວງຕໍ່ກັບການດຳລົງຊີວິດ, ການທຳມາຫາກິນຂອງປະຊາຊົນ, ຜູ້ປະກອບການຕ່າງໆ ແລະ ກະທົບໃສ່ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ປັດຈຸບັນ ລັດຖະບານໄດ້ອະນຸຍາດໃຫ້ເປີດດ່ານສາກົນໃນທົ່ວປະເທດ ຮອງຮັບຮອງເອົານັກທ່ອງທ່ຽວ, ນັກລົງທຶນຈາກຕ່າງປະເທດເຂົ້າມາເຄື່ອນໄຫວ ໃນ ສປປລາວ ໄດ້ເປັນປົກກະຕິ ເຊິ່ງແຂວງອັດຕະປື ກໍໄດ້ປະຕິບັດຕາມຂັ້ນເທິງເຊັ່ນກັນ ໂດຍໄດ້ເປີດດ່ານສາກົນພູເກືອ ສາມາດເຂົ້າ-ອອກ ໄດ້ຕາມປົກກະຕິ ແລະ ປະຕິບັດມາດຕະການຕ່າງໆທີ່ວາງໄວ້.

ສະນັ້ນ, ເພື່ອຮັບປະກັນໃນການຕິດຕາມກວດກາ ແລະ ເກັບກຳຂໍ້ມູນ, ຂໍ້ສະດວກ, ຂໍ້ຄົງຄ້າງ ແລະ ມາດຕະການຕ່າງໆກ່ຽວກັບ ການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດພະຍາດໂຄວິດ-19 ຢູ່ແຂວງອັດຕະປື ແລະ ເພື່ອເປັນຂໍ້ມູນພື້ນຖານລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ກະກຽມຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນມໍ່ໆນີ້.

ໃນລະຫວ່າງວັນທີ 24-25 ພຶດສະພາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ອັດຕະປື, ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານ ສພຂ ແລະ ທ່ານ ແຫວນຄຳ ປະທຸມມະແສງ ປະທານກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ຮັບຟັງການເຂົ້າລາຍງານຈາກພະແນກສາທາລະນະສຸກ, ພະແນກຖະແຫລງຂ່າວວັດທະນະທຳ ແລະ ທ່ອງທ່ຽວ, ສະພາການຄ້າ ແລະ ສະມາຄົມນັກທຸລະກິດ.

ຈາກນັ້ນ, ຄະນະໄດ້ເຄື່ອນໄຫວເຮັດວຽກເກັບກຳຂໍ້ມູນພື້ນທີ່ຕົວຈິງທີ່ເຮືອນພັກ, ຮ້ານອາຫານ, ສະຖານທີ່ທ່ອງທ່ຽວ ແລະ ດ່ານສາກົນພູເກືອ ໃນການກະກຽມຄວາມພ້ອມໃນດ້ານຕ່າງໆ ທີ່ມີທັງຂໍ້ສະດວກ, ຂໍ້ຄົງຄ້າງ, ບັນດາມາດຕະຖານ-ມາດຕະການ ໃນການຮັບມື ແລະ ຂໍ້ສະເໜີຈາກພາກສ່ວນທີ່ກ່ຽວຂ້ອງ.

(ນັກຂ່າວ ສພຂ ອັດຕະປື)

# ສພຂ ຫົວພັນ ເຄື່ອນໄຫວຕິດຕາມກວດກາ ແລະ ທາບທາມຮ່າງກົດໝາຍ



(ສພຊ) ວັນທີ 25 ພຶດສະພາ 2022 ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ເປີດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບປ້ອງກັນ ແລະ ຮັບມືການແຜ່ລະບາດພະຍາດໂຄວິດ-19 ຮ່ວມກັບພະແນກການທີ່ກ່ຽວຂ້ອງ ທີ່ຫ້ອງປະຊຸມຄະນະປະຈຳ ໂດຍການເປັນປະທານຂອງທ່ານ ສີຄຳ ບຸນມີໄຊ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສພຂ ຫົວພັນ; ເຂົ້າຮ່ວມໂດຍທ່ານ ພຸດພົນ ແກ້ວວົງໄຊ ຮອງເຈົ້າແຂວງ ແຂວງຫົວພັນ ທັງເປັນຫົວໜ້າຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ພະຍາດໂຄວິດ-19 ແຂວງຫົວພັນ, ມີຮອງຫົວໜ້າພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ; ປະທານສະພາການຄ້າ ແລະ ອຸດສາຫະກຳ ປະຈຳແຂວງ; ປະທານກຸ່ມບ້ານພັກ, ໂຮງແຮມ ຕະຫລອດຮອດຫົວໜ້າ-ຮອງຫົວໜ້າຂະແໜງ, ວິຊາການຂະແໜງ ວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສພຂ ເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍງານຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຈາກຜູ້ຕາງໜ້າພະແນກການທີ່ກ່ຽວຂ້ອງ ເຊິ່ງຍົກໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານແຕ່ລະດ້ານ. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ພ້ອມກັນປະກອບຄຳຄິດຄຳເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເພື່ອນຳເອົາເນື້ອໃນຈິດໃຈສຳຄັນດັ່ງກ່າວ ກະກຽມລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX.

ຈາກນັ້ນ, ໃນວັນທີ 26-27 ພຶດສະພາ 2022 ທີ່ຫ້ອງປະຊຸມ ສພຂ ຫົວພັນ ໄດ້ຈັດກອງປະຊຸມທາບທາມ ຮ່າງກົດໝາຍ 9 ສະບັບ ໂດຍການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານ ສພຂ ຫົວພັນ; ມີບັນດາທ່ານຄະນະປະຈຳ ສພຂ; ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ຄະນະກຳມະການ, ຄະນະເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ນຳສະເໜີຮ່າງກົດໝາຍ 9 ສະບັບຄື: ຮ່າງກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ; ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ; ກົດໝາຍວ່າດ້ວຍ ການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ກົດໝາຍວ່າດ້ວຍຊັບສິນຂອງລັດ; ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ; ກົດໝາຍວ່າດ້ວຍວິຈິດສິນ ແລະ ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໂດຍປະທານກອງປະຊຸມ ໄດ້ມີຄຳເຫັນເຈາະຈີ້ມບາງບັນຫາ ແລະ ຜູ້ແທນກອງປະຊຸມໄດ້ພ້ອມກັນປະກອບຄຳຄິດ, ຄຳເຫັນໃສ່ບັນດາຮ່າງກົດໝາຍດັ່ງກ່າວ ຢ່າງກົງໄປກົງມາ ໂດຍສະເພາະໄດ້ສຸມໃສ່ບາງໝວດ, ບາງມາດຕາ ທີ່ເຫັນວ່າຍັງບໍ່ທັນສອດຄ່ອງ ເໝາະສົມກັບສະພາບຄວາມເປັນຈິງ.

ຕອນທ້າຍ, ປະທານກອງປະຊຸມໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ທີ່ມີຄວາມເອົາໃຈໃສ່ຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ເນື້ອໃນ 9 ຮ່າງກົດໝາຍ ເພື່ອນຳເອົາຄຳ, ຄິດເຫັນຂອງບັນດາທ່ານ ນຳໄປຄົ້ນຄວ້າ-ສັງລວມ ສົ່ງໃຫ້ສະພາແຫ່ງຊາດປັບປຸງ, ນຳເຂົ້າຜ່ານ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ແລະ ສອດຄ່ອງກັບຊີວິດຕົວຈິງໃນສັງຄົມ.

(ນາງ ປຸ້ຍນິຕາ ເພັງມີໄຊ)

# ຕິດຕາມກວດກາ, ຊຸກຍູ້ 2 ວາລະແຫ່ງຊາດ ແລະ ຂົງເຂດວັດທະນະທຳ-ສັງຄົມ



ຊຸກຍູ້ 2 ວາລະແຫ່ງຊາດ

(ສພຊ) ໃນລະຫວ່າງວັນທີ 26-27 ພຶດສະພາ 2022 ສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ເຄື່ອນໄຫວວຽກງານຕ່າງໆ ເປັນຕົ້ນແມ່ນການເຄື່ອນໄຫວຕິດຕາມ, ຊຸກຍູ້ 2 ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ຢູ່ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ ນຳພາຄະນະໂດຍທ່ານ ບຸນໂຮມ ເທດທານີ ປະທານ ສພຂ ແລະ ທ່ານ ວຽງໄຊ ສີວິໄລ ຮອງປະທານ ສພຂ ພ້ອມດ້ວຍຄະນະ ເຊິ່ງມີຫົວໜ້າ-ຮອງຫົວໜ້າພະແນກ, ຫົວໜ້າ-ຮອງຫົວໜ້າກອງບັນຊາການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານຂອງບັນດາພະແນກການ ກົມກອງອ້ອມຂ້າງແຂວງເຂົ້າຮ່ວມ.

ທັງນີ້, ກໍເພື່ອຕິດຕາມຊຸກຍູ້ການຈັດຕັ້ງຜັນຂະຫຍາຍ 2 ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດຢູ່ບັນດາພະແນກການ, ກົມກອງອ້ອມຂ້າງແຂວງໃຫ້ມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ການຕິດຕາມກວດກາຄັ້ງນີ້, ໄດ້ຮັບຟັງການລາຍງານຂອງບັນດາພະແນກການກ່ຽວກັບການທົບທວນຄືນການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ, ຕາມຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດຢູ່ແຂວງຊຽງຂວາງ ແລະ ຂໍ້ຕົກລົງວ່າດ້ວຍຄວາມຮັບຜິດຊອບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການຜັນຂະຫຍາຍໂຄສະນາເຜີຍແຜ່ແຕ່ລະກົດໝາຍທີ່ຕິດພັນຂົງເຂດຂອງຕົນ, ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກ່ຽວກັບຂະແໜງການຂອງຕົນ.

ໃນການຕິດຕາມດັ່ງກ່າວ ບັນຜູ້ແທນທີ່ເຂົ້າຮ່ວມກອງປະຊຸມຂອງບັນດາພະແນກການ ກໍໄດ້ມີການແລກປ່ຽນຄຳຄິດ, ຄຳເຫັນເຊິ່ງກັນແລະກັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດ 2 ວາລະດັ່ງກ່າວ ໄດ້ຮັບຜົນສຳເລັດ ແລະ ສາມາດແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດຢູ່ແຂວງຊຽງຂວາງ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ.

ໄລຍະດຽວກັນ, ທ່ານ ນາງ ສົມພອນ ໂສພິລາວັນ ຮອງປະທານ ສພຂ ຊຽງຂວາງ ພ້ອມດ້ວຍທີມງານ ລົງຊຸກຍູ້ວຽກງານຂົງເຂດວັດທະນະທຳ-ສັງຄົມ ຢູ່ເມືອງຄຳ, ເມືອງໜອງແຮດ ແລະ ດ່ານສາກົນນ້ຳກັ່ນ; ເຂົ້າຮ່ວມມີຮອງເຈົ້າເມືອງ ຜູ້ຊີ້ນຳຂົງເຂດວັດທະນະທຳ-ສັງຄົມຂອງ 2 ເມືອງ, ທ່ານ ແພງວັນ ເພັດວົງກົດ ຫົວໜ້າດ່ານສາກົນນ້ຳກັ່ນ, ຫົວໜ້າ-ຮອງຫົວໜ້າຫ້ອງການອ້ອມຂ້າງເມືອງ ແລະ ພະນັກງານຂອງພາກສ່ວນກ່ຽວຂ້ອງ.

ໂອກາດດັ່ງກ່າວ ໄດ້ຮັບຟັງການລາຍງານຂອງຫົວໜ້າດ່ານສາກົນນ້ຳກັ່ນ, ບັນດາຫ້ອງການກ່ຽວຂ້ອງຂອງເມືອງ, ມີຫ້ອງການສຶກສາທິການ ແລະ ກິລາ, ຫ້ອງການສາທາລະນະສຸກ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ; ກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ວາລະແຫ່ງຊາດ, ມະຕິກອງປະຊຸມສະພາແຫ່ງຊາດ, ສະພາບການຮຽນ-ການສອນ, ອັດຕາສ່ວນຂອງຄູກັບນັກຮຽນ, ຄູສອນບໍ່ຖືກຂັ້ນຖືກສາຍ, ການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືກັບການລະບາດຂອງພະຍາດໂຄວິດ-19, ສະພາບຄົນເຂົ້າ-ອອກປະເທດຢູ່ດ່ານສາກົນນ້ຳກັ່ນພາຍຫລັງເປີດປະເທດ. ຈາກນັ້ນ, ຜູ້ເຂົ້າຮ່ວມພ້ອມກັນມີຄຳຄິດເຫັນ, ຄຳສະເໜີບັນຫາທີ່ຍັງຄ້າງຄາບໍ່ສາມາດປະຕິບັດໄດ້ນັ້ນ ເພື່ອເປັນຂໍ້ມູນນຳໄປສະເໜີຂັ້ນເທິງ ແລະ ເປັນຄຳສະເໜີເພື່ອໃຫ້ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ເພື່ອນຳສະເໜີຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ທີ່ຈະເປີດຂຶ້ນຢູ່ໃນລະຫວ່າງເດືອນມິຖຸນາຫາເດືອນກໍລະກົດນີ້.

ໃນຕອນທ້າຍ, ປະທານກອງປະຊຸມຍັງໄດ້ສັງລວມເອົາເນື້ອໃນ, ບັນດາຄຳຄິດເຫັນ, ຄຳສະເໜີ ແລະ ໂອ້ລົມຕໍ່ກອງປະຊຸມ, ມີທິດຊີ້ນຳບາງດ້ານ, ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຂະແໜງການທີ່ກ່ຽວຂ້ອງໃນຕໍ່ໜ້າ.

(ນາງ ສຸກສະຫວັນ ອິນທະແສງ ແລະ ບຸນສີ ສິດທິເດດ)



ຊຸກຍູ້ວຽກງານຂົງເຂດວັດທະນະທຳ-ສັງຄົມ



## ສຸກສະບາຍຫາຍໂຣຄາ

# ສາເຫດ ແລະ ວິທີຮັກສາບາດແຜຮ້ອນໃນ

# ໂດຍ: ສາວແອ່ນ



ບາດແຜຮ້ອນໃນ ຫລື ບາດໃນປາກ ທີ່ເຮັດໃຫ້ແສບທຸກເທື່ອທີ່ຮັບປະທານອາຫານ ຫລື ນັ່ງຢູ່ເສີຍໆ ກໍຮູ້ສຶກທໍລະມານຕໍ່ກັບອາການດັ່ງກ່າວ ເຊິ່ງຜູ້ຂຽນເຊື່ອວ່າຫລາຍທ່ານກໍອາດຈະເຄີຍເປັນມາແລ້ວ ພ້ອມທັງຮັບຮູ້ເຖິງຄວາມທໍລະມານຂອງມັນເປັນຢ່າງດີ ບາງທ່ານອາດຈະເປັນເລື້ອຍໆ ແລະ ບາງທ່ານອາດຈະບໍ່ຄ່ອຍເປັນ ຫລື ບໍ່ເຄີຍເປັນເລີຍກໍມີ; ສະນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້, ເຮົາມີສາເຫດ ແລະ ວິທີຮັກສາບາດແຜຮ້ອນໃນມານຳສະເໜີໃຫ້ແກ່ບັນດາທ່ານໄດ້ຮັບຮູ້ນຳກັນດັ່ງນີ້:

ບາດແຜຮ້ອນໃນ ຫລື ບາດແຜໃນປາກ ແມ່ນອາການທີ່ເນື້ອເຍື່ອອ່ອນໃນປາກມີການອັກເສບ ບາງເທື່ອອາດເປັນການອັກເສບທີ່ເລິກ ເຊິ່ງສາມາດເປັນໄດ້ທົ່ວປາກ ເປັນຕົ້ນແມ່ນລີ້ນ, ເພດານປາກ, ເຫືອກ..... ເຊິ່ງມີມາຈາກສາເຫດລຸ່ມນີ້:

- ພູມຄຸ້ມກັນຮ່າງກາຍມີການປ່ຽນແປງ ເຊັ່ນ ໄລຍະທີ່ເປັນປະຈຳເດືອນທີ່ຮໍໂມນຮ່າງກາຍມີການປ່ຽນແປງ;
- ການຕອບສະໜອງຕໍ່ແບັກທີ່ເລຍໃນປາກ;
- ມີເຊື້ອໄວຣັດ;
- ມີບັນຫາກ່ຽວກັບພູມຕ້ານທານ, ຂາດວິຕາມິນ ຫລື ແຮ່ທາດບາງຊະນິດ;
- ຄວາມຕຶງຄຽດສະສົມ;
- ດື່ມນ້ຳໜ້ອຍເກີນໄປ;
- ພັກຜ່ອນບໍ່ພຽງພໍ;
- ມີບາດແຜຈາກການກັດ ຫລື ການຂູດສີຈາກແຂ້ວປອມທີ່ຫລີມ ຫລື ເຫລັກດັດແຂ້ວທີ່ບໍ່ພໍດີກັບແຂ້ວ;

**ວິທີຮັກສາ**

- ປ້ວນປາກດ້ວຍນ້ຳເກືອທຸກໆ 2 ຊົ່ວໂມງ ຫລື ຫລັງຈາກກິນອາຫານທຸກຄັ້ງ ແລະ ຫລີກລ່ຽງນ້ຳຢາປ້ວນປາກທີ່ມີສ່ວນປະສົມຂອງທາດເຫລົ້າ;
- ເລືອກຮັບປະທານອາຫານທີ່ກິນງ່າຍ, ຫຍໍ້າງ່າຍ ແລະ ຍ່ອຍງ່າຍ ຫລີກລ່ຽງອາຫານທີ່ມີລົດຊາດສົ້ມ, ເຜັດ, ເຄັມ, ຮ້ອນໂພດ-ເຢັນໂພດ ແລະ ຢຸດການກະທຳທີ່ເປັນການທຳຮ້າຍປາກເຊັ່ນ: ສູບຢາ, ກິນເຫລົ້າ ຫລື ຄ້ຽວໝາກ;
- ພະຍາຍາມບໍ່ໃຫ້ຕົນເອງເຄັ່ງຄຽດຫລາຍ, ກິນນ້ຳໃຫ້ຫລາຍ, ພັກຜ່ອນໃຫ້ພຽງພໍ ແລະ ອອກກຳລັງກາຍເປັນປະຈຳ;
- ຫາກເກີດບາດແຜຮ້ອນໃນປາກ ໃນທີ່ຮູ້ສຶກວ່າບາດແຜໃຫຍ່ເກີນໄປ ແລະ ເຮັດທຸກຢ່າງແລ້ວແຕ່ບໍ່ດີຂຶ້ນ ຄວນໄປພົບແພດ ເພື່ອປິ່ນປົວ.

www.sanook.com

## ສາລາກະວີ

# ຄ່າຂອງຄົນຢູ່ທີ່ຜົນຂອງງານ

# ໂດຍ: ຫລານເຈົ້ານ້ອຍ

※ ອາພອນຂອງເຄື່ອງເອ້ ຄຽນຄາດຄີງຄີນ
ຕົກແຕ່ງຕາມຕົນມີ ຄອບຄອງເປັນເຈົ້າ
ບໍ່ໄດ້ເອົາຂອງຜູ້ ຄົນລວຍມາໃສ່
ບໍ່ໄດ້ໄປຊອກຈີ້ ຕີປຸ້ນຍາດເອົາ

※ ລົດລາຄັນທີ່ໃຊ້ ຂັບຂີ່ໄປມາ
ອາໄສເງິນແຮງງານ ຊອກຫາມາໄດ້
ບໍ່ໄຊ່ໄປສິນສໍ້ ຂໍໃຜມາຂີ່
ກໍມີຄວາມສາມາດສ້າງ ດີໄດ້ທໍ່ກັນ

※ ຄ່າຂອງຄົນບໍ່ຂຶ້ນ ນຳຢູ່ຄວາມລວຍ
ແຕ່ດ້ວຍຄຸນຄວາມດີ ທີ່ເຮົາພຽນສ້າງ
ຈະຖຸເຕີນດິນດັ້ນ ຫລືມີຍານຄອຍຂີ່
ກໍມີຄວາມສາມາດສ້າງ ດີໄດ້ທໍ່ກັນ

※ ມີເງິນພັນໝື່ນຕື້ ລືເລີດພຽງໃດ
ຫາກໄປ່ທຳຄວາມດີ ເພື່ອສັງຄົມໄວ້
ຕາຍໄປໃຜບໍ່ຍ້ອງ ຊົມເຊີຍເຊັ່ງຊ່າ
ມີແຕ່ຄົນດ່າປ້ອຍ ລວຍລ້າຄ່າບໍ່ມີ

※ ຄວາມດີຄືຄ່າຄໍ້າ ຊູຊ່ອຍປະດັບຕົນ
ທົນກະທຳຄວາມດີ ເພື່ອຜົນພາຍໜ້າ
ສັງຂານລາໂລກແລ້ວ ຄວາມດີຍັງເຫລືອຢູ່
ນຳພາທັງຊ່ວຍຍູ້ ຊູເຈົ້າໃຫ້ຊ່າລື ຫັ້ນແລ້ວ!

## ເບີໂທສຸກເສີນ

**❑ ຕຳຫລວດ**
- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

**❑ ໜ່ວຍກູ້ໄພ**
- ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ໜ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ໜ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625
- ມູນນິທິ ກູ້ໄພ ບາຄາ 1513



## ທັກທາຍ ລະບາຍ

# ສາວຈົ້ມ

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

※ *ກອງປະຊຸມສະໄໝສາມັນ**ເທື່ອທີ 3** ຂອງສະພາແຫ່ງຊາດ **ຊຸດທີ IX** ໄຂຂຶ້ນຢ່າງເປັນທາງການ ແລະ ສືບຕໍ່ຍາວນານໄປຮອດວັນທີ **8 ກໍລະກົດ 2022** ທີ່ຫ້ອງປະຊຸມ ສະພາແຫ່ງຊາດ ເຊິ່ງຕອນນີ້ບັນຍາກາດພວມຄຶກຄື້ນ ສສຊ ກໍ່ວມີຄຳເຫັນ ມີປະເດັນຄາໃຈ 156 **ໂຫແລ້ງ** ຟັງຄະແຫລງການເອົ້າ ຜົນກອງປະຊຸມເປັນໄລຍະ ລໍໃຫ້ປວງປະຊາພີ່ນ້ອງ ຕິດຕາມພ້ອມພ່ຳກັນ **ທ່ານເອີຍ!***

※ ***ລົດໄຟລາວ-ຈີນໄດ້**ເປີດດຳເນີນການມາຮອດເຄິ່ງປີ ເຊິ່ງໃນວັນທີ **2 ມິຖຸນາ** ບໍລິສັດກ່າວວ່າ ຂົນສົ່ງຜູ້ໂດຍສານໄດ້ **ສີ່ແສນໜຶ່ງໝື່ນຄົນ** ແລະ ສິນຄ້າ **ຫົກແສນສີ່ໝື່ນໂຕນ** ເພື່ອຕອບສະໜອງຕາມຄວາມຕ້ອງການຂອງຜູ້ເດີນທາງ ບໍລິສັດດັ່ງກ່າວ ໄດ້ເປີດນຳໃຊ້**ເພີ່ມອີກ 4 ສະຖານີ** ເຊັ່ນ ນາເຕີຍ, ກາສີ, ເມືອງງາ ແລະນາໝໍ້ **ລວມເປັນ 10 ສະຖານີ** ພ້ອມນີ້ ຍັງໄດ້ຊື້ລົດໄຟເພີ່ມອີກ 1 **ຂະບວນ (ລ້ານຊ້າງ)** ແລະລົດໄຟທຳມະດາ **ອີກ 1 ຂະບວນ** ເຊິ່ງສະເລ່ຍການແລ່ນແມ່ນ **6-8 ຖ້ຽວຕໍ່ມື້** ຊ່ວລືດັງສະນັ່ນກ້ອງ ບອງທົ່ວປັດຕະພີ ລໍພຽງມີເວລາເດີນ ຫ່ຽວລາວພໍ່ໃຫ້ ເສດຖະກິດຟື້ນໂຕໄດ້ ຄືຄຳຄົນຊ່າ ຊ່ອຍເງິນຕາໝູນເຄື່ອນຍ້າຍ ພັດທະນາຊາດໃຫ້ ຈະເລີນກ້າວຕ້ອງຊ່ອຍກັນ **ທ່ານເອີຍ!***

※ ***ຂ່າວ**ກ່ຽວກັບ **"ເງິນກີບເໝັ້ງຕີງ-ອ່ອນຄ່າ.."** ຫລາຍສື່ຈາບອກແຈ້ງ ຖະແຫລງທົ່ວໜັງສືພີມ ສາເຫດຄືເງິນເດີນທາງທະນາຄານເອັ້ນ ເປັນຍ້ອນອັນໃດແທ້ **ອັດຖຸ-ຄົນຂາດລະບຽບ** ບໍ່ຢູ່ບ່ອນກຳນົດໄວ້ **ຈອດຊະຊາຍອີກພ້ອມ** ລໍໃຫ້ຮ່ຳຮ້ອນ **ທ່ານເອີຍ!***

## ຊວນຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ຈ່າເປັນຕ້ອງລອຍ**

ມື້ໜຶ່ງທິດເຈີດໄປກິນເຝີ ກຳລັງປຸງເຝີຢູ່ດີໆ ເຫຼືອກເຫັນແມງວັນລອຍຢູ່ໃນບ້ວງເຝີ ກະເລີຍເອີ້ນໃສ່ສາວເສີບ

- ນ້ອງໆມາເບິ່ງນີ້ແມະແມງວັນມັນລອຍຢູ່ບ້ວງເຝີນີ້
- ກະທຳມະດາ
- ອ້າວ! ຄືວ່າຈັ່ງຊັ້ນ
- ຂອງແນວວ່າບ້ວງເຝີຫລາຍ ມັນບໍ່ມີບ່ອນໄຕ່ກະຈ່າເປັນຕ້ອງລອຍຕ່ອ່າ
- ?!?!?!



### ຄະຕິເຕືອນໃຈ

# ດອກຂະຍອມ

ຮ້ອຫລາຍຫລັກຈຶ່ງໝັ້ນ
ພີ່ນ້ອງຫລາຍຊົ້ນຈຶ່ງດ




# ປະຊາຊົນອິນເດຍ ຮຽກຮ້ອງແກ້ໄຂ ກົດໝາຍເກນທະຫານສະບັບໃໝ່

ແປ ແລະ ຮຽບຮຽງ: ນາງ ປາກາລັກ ພິມມີໄຊ

ຕາມການລາຍງານຂ່າວໃນວັນທີ 16 ມິຖຸນາຜ່ານມາ ມີລາຍງານວ່າ: ທ່ານ ນະເຣທຣາ ໂມທີ ນາຍົກລັດຖະມົນຕີອິນເດຍ ໄດ້ປະກາດວ່າ ຈະສືບຕໍ່ປະຕິຮູບກົດໝາຍວ່າດ້ວຍການເກນທະຫານສະບັບໃໝ່ ໂດຍມີຈຸດປະສົງເພື່ອຫລຸດຜ່ອນອາຍຸສະເລ່ຍຂອງທະຫານຢູ່ໃນກອງທັບ ແລະ ຫລຸດຜ່ອນຄ່າໃຊ້ຈ່າຍຄັງເງິນໃນກອງທຶນບຳນານຂອງທະຫານ ເຊິ່ງກຳລັງຊຸກຍູ້ໃຫ້ຜ່ານລັດຖະສະພາ.

ຈາກສາເຫດດັ່ງກ່າວ ເຮັດໃຫ້ປະຊາຊົນຈຳນວນໜຶ່ງເກີດຄວາມບໍ່ພໍໃຈ ຈຶ່ງເກີດການປະທ້ວງ ແລະ ກໍ່ການຈາລະຈົນຂຶ້ນ ເປັນຕົ້ນແມ່ນໄດ້ວາງເພີງຈູດອາຄານສຳນັກງານຂອງພັກລັດຖະບານ, ທຳລາຍລາງລົດໄຟ ແລະ ເຜົາຢາງປິດຖະໜົນ.

ຮ່າງກົດໝາຍສະບັບໃໝ່ດັ່ງກ່າວ ຈະສົ່ງຜົນໃຫ້ບຸກຄົນທັງເພດຊາຍ ແລະ ຍິງທີ່ມີອາຍຸລະຫວ່າງ 17 ຫາ 21 ປີຕ້ອງເຂົ້າຮັບການເກນທະຫານ ໂດຍການຝຶກອົບຮົມເປັນເວລາ 4 ປີ ໃນນັ້ນ, 1 ໃນ 4 ຂອງຜູ້ເຂົ້າຮ່ວມຝຶກອົບຮົມ ຈະໄດ້ຮັບການບັນຈຸເຂົ້າປະຈຳການ.

ປັດຈຸບັນ, ການເກນທະຫານຢູ່ປະເທດອິນເດຍ ແມ່ນດຳເນີນຢູ່ໃນກົມກອງຕ່າງໆ ແລະ ດຳເນີນໂດຍກົມກອງຂອງໃຜມັນ ໂດຍການເຂົ້າຮ່ວມການຝຶກອົບຮົມ ແລະ ປະຈຳການຈະເປັນເວລາ 17 ປີ, ດ້ວຍເຫດນີ້ ຈຶ່ງເຮັດໃຫ້ປະຊາຊົນອິນເດຍທີ່ຢາກເຂົ້າໄປເປັນທະຫານອາຊີບ ເກີດມີຄວາມກັງວົນ.

ຜູ້ປະທ້ວງຄົນໜຶ່ງເວົ້າວ່າ: "ຖ້າຫາກພວກເຮົາສາມາດເປັນທະຫານໄດ້ 4 ປີ ແລ້ວຫລັງຈາກນັ້ນພວກເຮົາຈະມີບໍ່ມີອາຊີບອີກ" ແລະ ໄດ້ກ່າວຕື່ມວ່າ: "ພວກເຮົາຈະຕ້ອງກາຍເປັນຄົນບໍ່ມີບ່ອນຢູ່ອາໄສພາຍຫລັງສຳເລັດການເກນທະຫານ ສະນັ້ນ, ພວກເຮົາຈຶ່ງອອກມາຮຽກຮ້ອງຕໍ່ບັນຫາດັ່ງກ່າວ".

ແຫລ່ງຂໍ້ມູນ: Reuters



# ສະພາສູງຍີ່ປຸ່ນ ຜ່ານຮ່າງກົດໝາຍເພີ່ມການລົງໂທດ ຈຳຄຸກຖານໝິ່ນປະໝາດຄົນອື່ນທາງອອນລາຍ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ




ອີງຕາມການລາຍງານຂ່າວໃນອາທິດຜ່ານມາ ໃຫ້ຮູ້ວ່າ: ສະພາສູງຍີ່ປຸ່ນໄດ້ຜ່ານຮ່າງກົດໝາຍທີ່ຈະເພີ່ມການລົງໂທດຈຳຄຸກຕໍ່ຜູ້ກະທຳຜິດໃນການໝິ່ນປະໝາດຜູ້ອື່ນຜ່ານສື່ສັງຄົມອອນລາຍ ເຊິ່ງຖືເປັນການເຄື່ອນໄຫວທີ່ສຳຄັນທີ່ຈະເພື່ອຊ່ວຍແກ້ໄຂບັນຫາການຂົ່ມເຫັງກັນທາງອິນເຕີເນັດ.

ໃນປັດຈຸບັນ, ການລົງໂທດຕໍ່ຜູ້ທີ່ໝິ່ນປະໝາດຜູ້ອື່ນແມ່ນຕ້ອງຈຳຄຸກບໍ່ເກີນ 30 ວັນ ຫລື ປັບໃໝບໍ່ເກີນ 10.000 ເຢນ (ປະມານ 1 ລ້ານກວ່າກີບ), ແຕ່ກົດໝາຍສະບັບໃໝ່ນີ້ໄດ້ສະເໜີໃຫ້ເພີ່ມໂທດຈຳຄຸກເປັນເວລາ 1 ປີ ແລະ ປັບໃໝສູງສຸດ 300.000 ເຢນ (ປະມານ 32 ລ້ານກວ່າກີບ).

ຮ່າງກົດໝາຍສະບັບນີ້ ມີຂຶ້ນໃນຂະນະທີ່ສັງຄົມຍີ່ປຸ່ນໄດ້ເກີດບັນຫາໝິ່ນປະໝາດກັນທາງອິນເຕີເນັດ ຫລັງຈາກນາງ ຮານະ ຄິມູຣະ ນັກມວຍປ້ຳຍິງໄວອາຍຸ 22 ປີ ທີ່ມີຊື່ສຽງໂດ່ງດັງໃນລາຍການ Terrace House ແຕ່ນາງໄດ້ເລືອກຈົບຊີວິດຂອງຕົນເອງໃນປີ 2020 ເນື່ອງຈາກບໍ່ສາມາດທີ່ຈະທົນກັບຂໍ້ຄວາມທີ່ສະແດງຄວາມກຽດຊັງຈາກຜູ້ໃຊ້ສື່ສັງຄົມອອນລາຍ.

ຫລັງຈາກການເສຍຊີວິດຂອງນາງ ຮານະ ຄິມູຣະ, ເຈົ້າໜ້າທີ່ຍີ່ປຸ່ນໄດ້ປັບໃໝຜູ້ຊາຍສອງຄົນທີ່ຂຽນຂໍ້ຄວາມໝິ່ນປະໝາດນາງ ຄົນລະ 9.000 ເຢນ ແຕ່ປະຊາຊົນຈຳນວນຫລາຍຄົນເຫັນວ່າ ການລົງໂທດແມ່ນເບົາເກີນໄປ ຈຶ່ງນຳໄປສູ່ການຊຸກຍູ້ໃຫ້ມີການແກ້ໄຂກົດໝາຍ.

ສະພາສູງຍີ່ປຸ່ນໄດ້ຜ່ານຮ່າງກົດໝາຍສະບັບນີ້ ໂດຍພະຍາຍາມສ້າງຄວາມສົມດຸນລະຫວ່າງການສ້າງກົດລະບຽບທີ່ເຂັ້ມງວດ ແລະ ການຮັກສາສິດເສລີພາບໃນການສະແດງຄວາມຄິດເຫັນຕາມລັດຖະທຳມະນູນ ເຊິ່ງໄດ້ມີການເພີ່ມເຕີມຂໍ້ກຳນົດວ່າເຈົ້າໜ້າທີ່ຕ້ອງກວດສອບຮ່າງກົດໝາຍດັ່ງກ່າວ ພາຍໃນ 3 ປີ ນັບແຕ່ມີຜົນບັງຄັບໃຊ້ ເພື່ອພິຈາລະນາຕື່ມອີກວ່າກົດໝາຍດັ່ງກ່າວ ຈຳກັດເສລີພາບໃນການສະແດງຄວາມຄິດເຫັນຫລືບໍ່.

ແຫລ່ງຂ່າວ: The Standard

# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 49 ການຍົກຍ້າຍຍານພາຫະນະທາງບົກ**

ການຍົກຍ້າຍຍານພາຫະນະທາງບົກ ແມ່ນການຍົກຍ້າຍຍານພາຫະນະພ້ອມດ້ວຍເອກະສານ ທີ່ໄດ້ຂຶ້ນທະບຽນຢູ່ແຂວງໜຶ່ງ ໄປຂຶ້ນທະບຽນເພື່ອນຳໃຊ້ຢູ່ແຂວງອື່ນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຍົກຍ້າຍຍານພາຫະນະທາງບົກ ຕ້ອງດຳເນີນຕາມຂັ້ນຕອນດັ່ງນີ້:

1. ການແຈ້ງຍົກຍ້າຍຍານພາຫະນະ ອອກ

1) ຍື່ນຄຳຮ້ອງຂໍຍົກຍ້າຍອອກຕາມແບບພິມ ພ້ອມດ້ວຍ ໃບທະບຽນຍານພາຫະນະ, ປຶ້ມຕິດ ຕາມການຂຶ້ນທະບຽນຍານພາຫະນະ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ສັນຍາ ຊື້ ຂາຍ, ໃບມອບກຳມະສິດ, ຂໍ້ຕົກລົງຍົກຍ້າຍຍານພາຫະນະ ໃນກໍລະນີ ລົດບໍລິຫານຂອງລັດ;

2) ເສຍ ຄ່າທຳນຽມ ແລະ ຄ່າບໍລິການ, ກອງທະບຽນຍານພາຫະນະທາງບົກ ຕ້ອງອອກໃບຍົກ ຍ້າຍ ພ້ອມທັງເອກະສານຫຼັກຖານຂອງລົດ ແລ້ວລຶບລ້າງເອກະສານຍານພາຫະນະຄັນດັ່ງກ່າວ ອອກຈາກລະບົບການຂຶ້ນທະບຽນຢູ່ແຂວງຕົ້ນທາງ.

ກອງທະບຽນຍານພາຫະນະທາງບົກແຂວງ, ນະຄອນຫຼວງຕ້ອງພິຈາລະນາອອກໃບຍົກຍ້າຍຍານພາຫະນະທາງບົກພາຍໃນເວລາ ຫ້າວັນ ລັດຖະການ.

2. ການແຈ້ງຍົກຍ້າຍຍານພາຫະນະ ເຂົ້າ

1) ຍື່ນຄຳຮ້ອງຂໍຍົກຍ້າຍເຂົ້າຕາມແບບພິມ ພ້ອມດ້ວຍເອກະສານຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1) ແລະ ຂໍ້ 2) ຂອງການແຈ້ງຍົກຍ້າຍຍານພາຫະນະ ອອກ;

2) ນຳລົດໄປກວດກາຕົວຈິງ ສົມທຽບກັບເອກະສານເດີມ;

3) ປົດປ້າຍທະບຽນເກົ່າ ພ້ອມທັງທຳລາຍຖິ້ມ ແລ້ວຕິດປ້າຍທະບຽນໃໝ່;

4) ເສຍ ຄ່າທຳນຽມ ແລະ ບໍລິການ.

ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ຕ້ອງບັນທຶກຂໍ້ມູນຍານພາຫະນະຄັນດັ່ງກ່າວ ເຂົ້າໃນລະບົບການຂຶ້ນທະບຽນຍານພາຫະນະ.

ອ່ານຕໍ່ສະບັບໜ້າ...

# ກຳລັງຂອງນັກບໍລິຫານ

# ໂດຍ: ດັ້ນກົບເມກ

ຜ່ານມາເຄີຍມີຫລາຍຄັ້ງທີ່ຜູ້ຂຽນໄດ້ນັ່ງຟັງນັກບໍລິຫານ ຫລື ຫົວໜ້າບາງຄົນຜູ້ຖືເບົາຫລັກວິຊາການເວົ້າວ່າ ເຮັດແນວໃດກໍໄດ້ຂໍໃຫ້ວຽກແລ້ວ ເຊິ່ງເບິ່ງຄືວ່າເປັນຄຳເວົ້າຕາມໃຈ ຈຶ່ງພາໃຫ້ຄິດໄດ້ວ່ານັກບໍລິຫານບາງຄົນໄດ້ຕຳແໜ່ງຕາມອາຍຸການອາວຸໂສ ເຊິ່ງຕ່າງກັບບາງຄົນທີ່ໄດ້ມາດ້ວຍຄວາມຮູ້ຄວາມສາມາດ ແລະ ສ້າງຜົນງານເປັນທີ່ປາກົດແກ່ສາຍຕາບຸກຄົນ, ພະພຸດທະເຈົ້າສອນໄວ້ວ່າ: ກຳລັງຂອງບໍລິຫານນັ້ນ ມີ 4 ປະການ:

1. ຜູ້ບໍລິຫານຕ້ອງມີປັນຍາຄວາມຮູ້ເປັນກຳລັງ ເພາະວ່າໜ່ວຍງານຈະສຳເລັດ ຫລື ລົ້ມແຫລວ ຕ້ອງໄດ້ອາໄສປັນຍາຂອງຜູ້ບໍລິຫານເປັນໂຕຕັດສິນ.

2. ຜູ້ບໍລິຫານຕ້ອງມີຄວາມພຽນກ້າຫານ ເຊິ່ງໝາຍເຖິງກຳລັງໃຈນັ້ນເອງ ເພາະກຳລັງໃຈເຂັ້ມແຂງຍ່ອມສົ່ງເສີມໃຫ້ກຳລັງປັນຍາພົ້ນເດັ່ນ ບາງທີກໍພົວພັນກັບຄອບຄົວຄູ່ຊີວິດ ເພາະວ່າອາດີດໄດ້ພິສູດແລ້ວວ່າ ຄູ່ຊີວິດມີສ່ວນສຳຄັນຕໍ່ຄວາມສຳເລັດຂອງອີກຝ່າຍ ປຽບດັ່ງພະເຫວດສັນດອນ ທີ່ມີນາງມັດທີຢູ່ຄຽງກາຍຄອຍໃຫ້ກຳລັງໃຈ ເຖິງຈະຖືກຂັບໄລ່ອອກຈາກເມືອງ; ຄູ່ຊີວິດທີ່ແທ້ກໍຍອມຮ່ວມສຸກ ແລະ ທຸກ ໄປພ້ອມກັນ.

3. ກຳລັງແຫ່ງຄວາມບໍລິສຸດສະອາດໃນໜ້າທີ່ວຽກງານ ເປັນປັດໄຈສຳຄັນບໍ່ສາມາດເຮັດໃຫ້ລູກນ້ອງຕຳນິຕິຕຽນ ພາໃຫ້ຊື່ສຽງກຽດສັກສີເປັນທີ່ຍອມຮັບ ແຕ່ຖ້າວ່າຜູ້ບໍລິຫານຄົນໃດຫາກຂາດຄວາມບໍລິສຸດຍຸຕິທຳ, ບໍ່ປອດໄສໃນໜ້າວຽກແລ້ວ ກໍຈະມີທາງສຽງທັນທີ.

4. ກຳລັງແຫ່ງການສົງເຄາະ ຄືຜູ້ບໍລິການມີນ້ຳໃຈຊ່ວຍເຫລືອແບ່ງປັນແກ່ລູກນ້ອງ, ບໍ່ເປັນຄົນເຫັນແກ່ໄດ້ ຫລືເຫັນແກ່ຜົນປະໂຫຍດຕົນຝ່າຍດຽວ ແຕ່ຕ້ອງເຫັນແກ່ສ່ວນລວມ.

ສັງລວມໄດ້ວ່າ: ກຳລັງຂອງຜູ້ບໍລິການ 4 ປະການນີ້ ຖ້າໃຜເຮັດໄດ້ກໍສາມາດເປັນປັດໄຈຍູ້ໜູນໃຫ້ໜ້າທີ່ວຽກງານຂອງເຂົາຜູ້ນັ້ນສູງສົ່ງຂຶ້ນ ແຕ່ຖ້າຂາດຄຸນສົມບັດດັ່ງກ່າວແລ້ວ ກໍຈະກາຍເປັນພຽງຜູ້ເຮັດໜ້າທີ່ຕາມລະບຽບປະເພນີ!.
























**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ